# ຄູ່ມືຂອງພໍ່ແມ່ກ່ຽວກັບຂະບວນການເຂົ້າຮຽນ , ການປະເມີນຜົນ ແລະ ການໄລ່ອອກ

ເດືອນມັງກອນ 2025



THE TEXAS LEGAL FRAMEWORK
for the Child-Centered Special Education Process

FW.ESCAPPS.NET

TEA
Texas Education Agency

TEA.TEXAS.GOV/TEXASSPED

SPEDTEX
Special Education Information Center

SPEDTEX.ORG

# ສາລະບານ

ບົດນໍາ.....2

ຄູ່ມືຂອງພໍ່ແມ່ກ່ຽວກັບຂະບວນການເຂົ້າຮຽນ, ການປະເມີນຜົນ ແລະ ການໄລ່ອອກ.....3

ການແຊກແຊງເດັກນ້ອຍໃນໄລຍະເລີ່ມຕົ້ນ.....3
ການບໍລິການສໍາລັບເດັກທີ່ມີອາຍຸສາມຫາຫ້າປີ (ກ່ອນການເຂົ້າໂຮງຮຽນອະນຸບານ).....3
ຄວາມຊ່ວຍເຫຼືອສໍາລັບເດັກນ້ອຍທີ່ຢູ່ໃນໂຮງຮຽນ.....3
ລະບົບການຊ່ວຍເຫຼືອແບບມີຫຼາຍຊັ້ນ, ລວມທັງການຕອບສະໜອງຕໍ່ການແຊກແຊງຊ່ວຍເຫຼືອ.....4
ການສົ່ງຕໍ່ເພື່ອປະເມີນໃນເບື້ອງຕົ້ນ.....4
ແຈ້ງການລ່ວງໜ້າເປັນລາຍລັກອັກສອນ.....5
ການຍິນຍອມໂດຍພໍ່ແມ່.....5
ຂະບວນການປະເມີນຜົນ.....6
ກອງປະຊຸມຂອງຄະນະກໍາມະການຮັບຜິດຊອບການຮັບເຂົ້າຮຽນ, ການກວດສອບ ແລະ ການໄລ່ອອກ.....7
ການມີສິດໄດ້ຮັບ.....8
ການພັດທະນາໂຄງການສຶກສາສະເພາະບຸກຄົນ (IEP).....9
ລະດັບຄວາມສໍາເລັດຂອງການສຶກສາໃນປັດຈຸບັນ ແລະ ຜົນການດໍາເນີນງານຕາມໜ້າວຽກ.....10
ເປົ້າໝາຍປະຈໍາປີ.....10
ການສຶກສາພິເສດ, ການບໍລິການທີ່ກ່ຽວຂ້ອງ ແລະ ການບໍລິການ ແລະ ຄວາມຊ່ວຍເຫຼືອເສີມ.....11
ການປະເມີນຂອງລັດ.....11
ການເຊື່ອມຕໍ່.....11
ນັກຮຽນຜູ້ໃຫຍ່.....13
ເດັກນ້ອຍທີ່ມີອາການໂອຕິສຕິກ.....13
ເດັກນ້ອຍທີ່ຫູໜວກ ຫຼື ມີຄວາມລໍາບາກຕໍ່ການໄດ້ຍິນ.....13
ເດັກນ້ອຍທີ່ຕາບອດ ຫຼື ພິການທາງສາຍຕາ.....14
ແຜນການປັບປຸງ ຫຼື ແຊກແຊງຊ່ວຍເຫຼືອພຶດຕິກໍາ (BIP).....14
ການບໍລິການປີການສຶກສາເພີ່ມຕື່ມ (ESY).....14
ການຈັດວາງ.....15
ການຕັດສິນໃຈຂອງຄະນະກໍາມະການ ARD.....15
ສໍາເນົາຂອງ IEP.....16
ການທົບທວນ IEP.....16
ການປະເມີນຄືນໃໝ່.....17
ການປະເມີນການສຶກສາອິດສະຫຼະ (IEE).....17
ການຍົກເລີກຄວາມຍິນຍອມສໍາລັບການບໍລິການ.....18
ການຈົບການສຶກສາ.....18
ການລົງວິໄນ.....19
ການເລັ່ງຂະບວນການພິຈາລະນາຄະດີ.....21
ການແກ້ໄຂຂໍ້ຂັດແຍ່ງ.....21
ການຊ່ວຍເຫຼືອເພີ່ມຕື່ມ.....21

ລິຂະສິດ © 2025. ໜ່ວຍງານການສຶກສາແຫ່ງລັດເທັກຊັດ. ສະຫງວນລິຂະສິດທັງໝົດ.

## ບົດນຳ

ຄູ່ມືສະບັບນີ້ແມ່ນໄດ້ຮັບການສ້າງຂຶ້ນໂດຍ ໜ່ວຍງານການສຶກສາແຫ່ງລັດເທັກຊັດ (**TEA**) ເພື່ອປະຕິບັດຕາມຂໍ້ກຳນົດໃນປະມວນກົດໝາຍວ່າດ້ວຍການສຶກສາແຫ່ງລັດເທັກຊັດ §26.0081. ຄູ່ມືນີ້ແມ່ນຖືກອອກແບບເພື່ອເຮັດທ່ານໃນຖານະພໍ່ແມ່ຂອງເດັກນ້ອຍທີ່ໄດ້ຮັບ ຫຼື ອາດມີສິດໄດ້ຮັບ ການບໍລິການດ້ານການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ໄດ້ເຂົ້າໃຈດີຂຶ້ນ ກ່ຽວກັບຂະບວນການສຶກສາພິເສດ ແລະ ກ່ຽວກັບສິດ ແລະ ຄວາມຮັບຜິດຊອບດ້ານຂະບວນການຂອງທ່ານ ເພື່ອທ່ານຈະສາມາດມີສ່ວນຮ່ວມໃນຂະບວນການຕັດສິນໃຈທີ່ກ່ຽວຂ້ອງກັບການສຶກສາ ຂອງລູກຂອງທ່ານຢ່າງເຕັມທີ່.

ກົດໝາຍສຳລັບບຸກຄົນທີ່ໄດ້ຮັບການສຶກສາສຳລັບຜູ້ພິການຂອງປີ 2004 (**IDEA**) ແມ່ນກົດໝາຍຂອງລັດຖະບານກາງທີ່ປົກຄອງຂະບວນການສຶກສາພິເສດ. ໜຶ່ງໃນເປົ້າໝາຍຫຼັກຂອງ IDEA ແມ່ນເພື່ອຮັບປະກັນໃຫ້ເດັກນ້ອຍທີ່ພິການໄດ້ຮັບການສຶກສາ ສາທາລະນະທີ່ເໝາະສົມໂດຍບໍ່ເສຍຄ່າ (**FAPE**) ເຊິ່ງໃຫ້ຄວາມສຳຄັນແກ່ການສຶກສາ ແລະ ການບໍລິການທີ່ກ່ຽວຂ້ອງ ເຊິ່ງຖືກອອກແບບມາໃຫ້ບັນລຸຄວາມຕ້ອງການທີ່ສະເພາະຂອງພວກເຂົາ ແລະ ຈັດກຽມໃຫ້ພວກເຂົາມີການສຶກສາທີ່ດີຂຶ້ນ, ການຈ້າງງານ ແລະ ການໃຊ້ຊີວິດຢ່າງເປັນອິດສະຫຼະ. ການສຶກສາພິເສດໝາຍເຖິງການສິດສອນທີ່ຖືກອອກແບບເປັນພິເສດເພື່ອບັນລຸຄວາມຕ້ອງການທີ່ສະເພາະຂອງເດັກນ້ອຍທີ່ພິການ. ການບໍລິການທີ່ກ່ຽວຂ້ອງແມ່ນການບໍລິການພິເສດທີ່ຈຳເປັນຕໍ່ການສະໜັບສະໜູນການສຶກສາພິເສດຂອງນັກຮຽນ ເພື່ອວ່າພວກເຂົາຈະສາມາດມີຄວາມກ້າວໜ້າ ເພື່ອບັນລຸເປົ້າໝາຍດ້ານການສຶກສາ ແລະ ດ້ານໜ້າທີ່ຂອງພວກເຂົາ. ການບໍລິການທີ່ກ່ຽວຂ້ອງສາມາດລວມເຖິງການບໍລິການ ເຊັ່ນ: ການບຳບັດດ້ານອາຊີບ, ການບຳບັດດ້ານຄຳເວົ້າ-ພາສາ, ການບໍລິການໃຫ້ຄຳປຶກສາ, ການບໍລິການດ້ານປະຖົມນິເທດ ແລະ ການເຄື່ອນໄຫວ ແລະ/ຫຼື ການບໍລິການດ້ານການເດີນທາງ.

ພາຍໃຕ້ IDEA, ການເຂົ້າຮ່ວມຂອງພໍ່ແມ່ໃນທຸກໆຂັ້ນຕອນຂອງຂະບວນການສຶກສາພິເສດແມ່ນມີຄວາມສຳຄັນ. ຄູ່ມືສະບັບນີ້ອະທິບາຍຫຼາກຫຼາຍກິດຈະກຳທີ່ອາດເກີດຂຶ້ນໃນລະຫວ່າງຂະບວນການນັ້ນ. ເພື່ອຊ່ວຍໃຫ້ທ່ານເຂົ້າໃຈສິດຕາມກົດໝາຍຂອງທ່ານພາຍໃຕ້ IDEA ໄດ້ດີຂຶ້ນ, ໂຮງຮຽນຈຳເປັນຕ້ອງມອບສຳເນົາເອກະສານທີ່ເອີ້ນວ່າ *ແຈ້ງການກ່ຽວກັບມາດຕະການປ້ອງກັນຕາມຂັ້ນຕອນ* (ລິ້ງເຊື່ອມຕໍ່: fw.escapps.net) ໃຫ້ແກ່ທ່ານ ໃນເວລາໃດໜຶ່ງໃນຂະບວນການສຶກສາພິເສດ. ເອກະສານດັ່ງກ່າວຕ້ອງໄດ້ມີໃຫ້ແກ່ທ່ານຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ແລະ ເມື່ອສະຖານະການໃດໜຶ່ງຂ້າງລຸ່ມນີ້ເກີດຂຶ້ນ:

- ເມື່ອຖືກອ້າງເຖິງ ຫຼື ທ່ານຮຽກຮ້ອງໃຫ້ມີການປະເມີນລູກຂອງທ່ານໃນເບື້ອງຕົ້ນ;
- ເມື່ອໄດ້ຮັບຄຳຮ້ອງຄັ້ງທຳອິດຈາກລັດໃນໜຶ່ງສົກຮຽນ;
- ເມື່ອໄດ້ຮັບການຮຽກຮ້ອງຄັ້ງທຳອິດສຳລັບຂະບວນການພິຈາລະນາທີ່ຮອດກຳນົດໃນໜຶ່ງສົກປີ;
- ໃນມື້ທີ່ເກີດການຕັດສິນເພື່ອດຳເນີນການສັບປ່ຽນດ້ານວິໄນ; ແລະ
- ເມື່ອທ່ານຮຽກຮ້ອງ.

ໂຮງຮຽນຍັງຈຳເປັນຕ້ອງໄດ້ໃຫ້ເອກະສານທີ່ເອີ້ນວ່າ ແບບຟອມ *ພາບລວມກ່ຽວກັບການສຶກສາພິເສດສຳລັບພໍ່ແມ່* ທີ່ TEA ສ້າງຂຶ້ນໃຫ້ແກ່ທ່ານອີກດ້ວຍ, ເຊິ່ງຈະມອບໃຫ້ທ່ານໃນເວລາທີ່ລູກຂອງທ່ານຖືກນຳສົ່ງໃນເບື້ອງຕົ້ນໄປຍັງການປະເມີນຜົນການສຶກສາພິເສດ.

ໃນລັດເທັກຊັດ, ຄະນະກຳມະການຮັບຜິດຊອບການຮັບເຂົ້າຮຽນ, ການກວດສອບ ແລະ ການໄລ່ອອກ (**ARD**) ດຳເນີນການຕັດສິນໃຈກ່ຽວກັບການມີສິດຂອງເດັກນ້ອຍສຳລັບການບໍລິການດ້ານການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ແລະ ການຕັດສິນໃຈຕໍ່ເລື່ອງໃຫຍ່ສ່ວນຫຼາຍກ່ຽວກັບໂປຣແກຣມການສຶກສາພິເສດຂອງເດັກນ້ອຍ. ທ່ານອາດຍັງໄດ້ຍິນການອ້າງເຖິງກຸ່ມນີ້ວ່າເປັນທີມໂປຣແກຣມ ການສຶກສາສຳລັບລາຍບຸກຄົນ (**IEP**)ເຊິ່ງຄຳສັບດັ່ງກ່າວແມ່ນຖືກໃຊ້ໃນກົດໝາຍຂອງລັດຖະບານກາງ. ຖ້າຄະນະກຳມະການ ARD ຖືກກໍ່ຕັ້ງຂຶ້ນສຳລັບລູກຂອງທ່ານ, ທ່ານຈະເປັນສະມາຊິກຂອງຄະນະກຳມະການດັ່ງກ່າວ.

ຄູ່ມືສະບັບນີ້ຈະໄດ້ຮັບການອັບເດດເປັນໄລຍະຕາມທີ່ເກີດມີການປ່ຽນແປງໃນເງື່ອນໄຂການສຶກສາຂອງລັດຖະບານກາງ ແລະ ແຫ່ງລັດ. ສະບັບອີເລັກໂທຣນິກທີ່ສາມາດພິມອອກແມ່ນມີພ້ອມໃຫ້ທີ່ເວບສູນບໍລິການການສຶກສາເຂດ 18 ໃນໂຄງສ້າງດ້ານກົດໝາຍສຳລັບຂະບວນການສຶກສາພິເສດ ໂດຍມີເດັກນ້ອຍເປັນຈຸດສູນກາງທີ່ (ລິ້ງເຊື່ອມຕໍ່: fw.escapps.net).

ວັນທີ ແລະ ກຳນົດເວລາໃນຂະບວນການສຶກສາພິເສດ ແມ່ນມີຢູ່ຫຼາກຫຼາຍ. ໃນເອກະສານພິມເຜີຍແຜ່ສະບັບນີ້, ໄດ້ມີການອະທິບາຍວັນທີ ແລະ ເວລາກຳນົດທີ່ສຳຄັນ. ນອກຈາກນັ້ນ, ເອກະສານປະກອບແບບອອນລາຍກໍມີໃຫ້ອີກດ້ວຍ ເພື່ອຊ່ວຍຕອບຄຳຖາມທີ່ທ່ານມີກ່ຽວກັບຊ່ວງເວລາໃນການປະເມີນ, ແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນ, ການປະເມີນຜົນ IEP ແລະ ແນວຄວາມຄິດທີ່ສຳຄັນອື່ນໆ. *ກຳນົດເວລາສຳລັບ ການປະເມີນເບື້ອງຕົ້ນແບບເຕັມຮູບແບບ ແລະ ລາຍບຸກຄົນສຳລັບການສຶກສາພິເສດ (FIIE)* ແມ່ນມີຢູ່ບ່ອນນີ້ (ລິ້ງເຊື່ອມຕໍ່: https://bit.ly/3V5feWG).

# ຄູ່ມືຂອງພໍ່ແມ່ກ່ຽວກັບຂະບວນການເຂົ້າຮຽນ, ການປະເມີນຜົນ ແລະ ການໄລ່ອອກ

## ການແຊກແຊງເດັກນ້ອຍໃນໄລຍະເລີ່ມຕົ້ນ

ມີຄວາມຊ່ວຍເຫຼືອສຳລັບຄອບຄົວທີ່ມີເດັກອ່ອນ ແລະ ເດັກນ້ອຍຮຽນຍ່າງຜູ້ທີ່ມີພັດທະນາການຊ້າ. ໜ່ວຍງານໃນລັດເທັກຊັດທີ່ສະໜອງການບໍລິການແຊກແຊງຊ່ວຍເຫຼືອແຕ່ເບື້ອງຕົ້ນເຫຼົ່ານີ້ ແມ່ນໄດ້ແກ່ຄະນະກຳມະການດ້ານສຸຂະພາບ ແລະ ການບໍລິການມະນຸດແຫ່ງລັດເທັກຊັດ. ໂປຣແກຣມສຳລັບເດັກນ້ອຍທີ່ອາຍຸນ້ອຍຫຼາຍແມ່ນໂປຣແກຣມແຊກແຊງເດັກນ້ອຍໃນໄວເລີ່ມຕົ້ນ (ECI). ການບໍລິການເຫຼົ່ານີ້ແມ່ນສຳລັບເດັກນ້ອຍທີ່ມີອາຍຸຕໍ່າກວ່າສາມປີ.

ຕອນອາຍຸສາມປີ, ເດັກນ້ອຍທີ່ພິການອາດມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ. ຖ້າເປັນດັ່ງນັ້ນ, ເຂດການສຶກສາຂອງເດັກນ້ອຍຈະຮັບຜິດຊອບເພື່ອຮັບປະກັນວ່າມີ FAPE ໃຫ້ເດັກນ້ອຍເມື່ອເດັກນ້ອຍຄົບຮອບອາຍຸສາມປີ. ບໍ່ແມ່ນເດັກນ້ອຍທຸກຄົນທີ່ໄດ້ຮັບການບໍລິການ ECI ມີຄຸນສົມບັດໄດ້ຮັບການບໍລິການທີ່ສະໜອງໃຫ້ໂດຍໂຮງຮຽນລັດ. ສະນັ້ນ ກ່ອນທີ່ເດັກນ້ອຍຮຽນຍ່າງທີ່ຈະໄດ້ຮັບການບໍລິການ ECI ຈະອາຍຸໄດ້ສາມປີຢ່າງໜ້ອຍ 90 ມື້ ຕາມປະຕິທິນ, ຈະໄດ້ມີການນັດພົບປະເພື່ອຊ່ວຍໃຫ້ຄອບຄົວປ່ຽນຈາກການບໍລິການ ECI ເປັນການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ຖ້າເໝາະສົມ. ຖ້າເດັກນ້ອຍມີຄຸນສົມບັດ, ຕ້ອງມີການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງໃຫ້ສຳລັບເດັກນ້ອຍໃນວັນເກີດປີທີສາມຂອງລາວ. *Beyond ECI* ແມ່ນສິ່ງຈັດພິມທີ່ປະກອບມີຂໍ້ມູນກ່ຽວກັບການປ່ຽນແປງຈາກໂຄງການຊ່ວຍເຫຼືອເດັກນ້ອຍໄວເລີ່ມຕົ້ນຫາການສຶກສາພິເສດ. ສິ່ງຈັດພິມນີ້, *Beyond ECI,* ສາມາດພົບໄດ້ຢູ່ບ່ອນນີ້ (ລິ້ງເຊື່ອມຕໍ່: bit.ly/35G7y3E).

ເດັກນ້ອຍຕັ້ງແຕ່ເກີດຈົນຮອດອາຍຸ 3 ປີທີ່ມີເງື່ອນໄຂໄດ້ຮັບໃນນາມຄົນຫູໜວກ ຫຼື ຫູຕຶງ ຫຼື ໃນນາມເປັນເດັກທີ່ມີຄວາມບົກພ່ອງທາງສາຍຕາແມ່ນມີສິດໄດ້ຮັບທັງ ECI ແລະ ການບໍລິການການສຶກສາພິເສດຈາກໂຮງຮຽນຂອງລັດ. ການບໍລິການການສຶກສາພິເສດຂອງໂຮງຮຽນລັດຈະເສີມສ້າງ ແລະ ປະສານງານກັບການໃຫ້ການບໍລິການ ECI ແກ່ບັນດາເດັກນ້ອຍເຫຼົ່ານີ້.

## ການບໍລິການສຳລັບເດັກທີ່ມີອາຍຸສາມຫາຫ້າປີ (ກ່ອນການເຂົ້າໂຮງຮຽນອະນຸບານ)

ນອກຈາກນັ້ນ, ການຊ່ວຍເຫຼືອກໍຍັງມີໃຫ້ແກ່ເດັກທີ່ມີສິດໄດ້ຮັບໃນລະຫວ່າງອາຍຸສາມຫາຫ້າປີ ແລະ ການບໍລິການເຫຼົ່ານັ້ນແມ່ນເອີ້ນວ່າ ການບໍລິການການສຶກສາພິເສດໃນໄວເດັກ (**ECSE**). ເດັກເຫຼົ່ານັ້ນບາງຄົນຈະເລີ່ມໄດ້ຮັບການບໍລິການເມື່ອມີອາຍຸສາມປີ ໃນເວລາທີ່ພວກເຂົາປ່ຽນຜ່ານອອກຈາກການບໍລິການ ECI ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້. ແນວໃດກໍຕາມ, ເດັກຄົນອື່ນໆຈະໄດ້ຮັບການປະເມີນ ແລະ ລະບຸໂດຍອີງໃສ່ຂໍ້ມູນອ້າງອີງອື່ນໆ ເຊັ່ນ: ການຮ້ອງຂໍຂອງພໍ່ແມ່ໃນເວລາທີ່ພວກເຂົາມີຄວາມກັງວົນກ່ຽວກັບການຮຽນຮູ້ ແລະ ການພັດທະນາການຂອງລູກຂອງຕົນ. ການບໍລິການ ECSE ແມ່ນສະໜອງໃຫ້ຢູ່ໃນສະພາບແວດລ້ອມທີ່ແຕກຕ່າງກັນໄປ ແລະ ໃນສະຖານະການທີ່ຈຳກັດ, ເດັກບາງຄົນມີສິດໄດ້ຮັບການລົງທະບຽນເຂົ້າຮຽນທັງໃນໂຮງຮຽນເອກະຊົນ ແລະ ໂຮງຮຽນລັດຄວບຄູ່ກັນໄປ ໃນເວລາທີ່ພວກເຂົາມີອາຍຸສາມ ແລະ ສີ່ປີ.

## ຄວາມຊ່ວຍເຫຼືອສຳລັບເດັກນ້ອຍທີ່ຢູ່ໃນໄວຮຽນ

ຖ້າທ່ານມີຄວາມກັງວົນກ່ຽວກັບການຮຽນຮູ້ ຫຼື ພຶດຕິກຳຂອງລູກທີ່ຢູ່ໃນໄວຮຽນ (ຢ່າງໜ້ອຍອາຍຸ 5 ປີ ຫຼື ເຂົ້າໂຮງຮຽນອະນຸບານ ຖ້າອາຍຸຕໍ່າກວ່າ 5 ປີ) ຂອງທ່ານ, ຂັ້ນຕອນທຳອິດຄືສົນທະນາກັບອາຈານຂອງລູກຂອງທ່ານ ຫຼື ອຳນວຍການໂຮງຮຽນກ່ຽວກັບຄວາມກັງວົນຂອງທ່ານ. ຖ້າຂັ້ນຕອນນີ້ບໍ່ປະສົບຄວາມສຳເລັດ, ທ່ານຄວນຂໍໃຫ້ພະນັກງານໂຮງຮຽນສົ່ງຕໍ່ຫາທີມຊ່ວຍເຫຼືອນັກຮຽນທີ່ຕັ້ງຢູ່ໃນວິທະຍາເຂດ ເຊິ່ງເປັນທີມຄູອາຈານ ແລະ ພະນັກງານອື່ນໆທີ່ພົບປະກັນຢູ່ປະຈຳເພື່ອນຳສະເໜີບັນຫາໃນການຮຽນຮູ້ ຫຼື ພຶດຕິກຳທີ່ເດັກນ້ອຍກຳລັງປະສົບ.

ນັກຮຽນທີ່ມີຄວາມຫຍຸ້ງຍາກໃນຫ້ອງຮຽນສຳລັບການສຶກສາທົ່ວໄປສາມາດຖືກພິຈາລະນາໃຫ້ຮັບການບໍລິການແຊກແຊງຊ່ວຍເຫຼືອ ແລະ ການສະໜັບສະໜູນທັງໝົດໃນຕອນທຳອິດ ຫຼື ຖືກນຳສົ່ງໄປຍັງການປະເມີນສຳລັບການສຶກສາພິເສດພາຍໃຕ້ IDEA ແທນທີ່ຈະຮັບການບໍລິການແຊກແຊງຊ່ວຍເຫຼືອ ແລະ ການສະໜັບສະໜູນ. ຖ້ານັກຮຽນສືບຕໍ່ມີບັນຫາໃນຫ້ອງຮຽນສຳລັບການສຶກສາທົ່ວໄປໂດຍໄດ້ຮັບການບໍລິການແຊກແຊງຊ່ວຍເຫຼືອ ຫຼື ການສະໜັບສະໜູນ ຫຼື ຄວາມຕ້ອງການຂອງນັກຮຽນບໍ່ສາມາດຖືກແກ້ໄຂໄດ້ຜ່ານການສະໜອງການບໍລິການແຊກແຊງຊ່ວຍເຫຼືອ ຫຼື ການສະໜັບສະໜູນ ຫຼື ທຸກເວລາທີ່ໂຮງຮຽນສົງໄສ ຫຼື ມີເຫດຜົນທີ່ຈະສົງໄສວ່າມີຄວາມພິການ ແລະ ຄວາມຕ້ອງການທີ່ເປັນໄປໄດ້ສຳລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ, ໂຮງຮຽນຈຳເປັນຕ້ອງນຳສົ່ງນັກຮຽນໄປຍັງການປະເມີນແບບບຸກຄົນ ແລະ ເບື້ອງຕົ້ນຢ່າງຄົບຖ້ວນພາຍໃຕ້ IDEA. ນັກຮຽນບໍ່ຈຳເປັນຕ້ອງໄດ້ຮັບການບໍລິການແຊກແຊງຊ່ວຍເຫຼືອ ແລະ ການສະໜັບສະໜູນສຳລັບໄລຍະເວລາທີ່ສະເພາະກ່ອນທີ່ຈະຖືກສົ່ງຕໍ່ເພື່ອການປະເມີນແບບບຸກຄົນ ແລະ ເບື້ອງຕົ້ນຢ່າງຄົບຖ້ວນ. ການສົ່ງຕໍ່ ຫຼື ຄຳຮ້ອງຂໍເພື່ອການປະເມີນແບບບຸກຄົນ ແລະ ເບື້ອງຕົ້ນຢ່າງຄົບຖ້ວນອາດເກີດຂຶ້ນໃນເວລາໃດກໍໄດ້ໂດຍພະນັກງານຂອງໂຮງຮຽນ, ພໍ່ແມ່ຂອງນັກຮຽນ ຫຼື ຜູ້ປົກຄອງຕາມກົດໝາຍ ຫຼື ບຸກຄົນອື່ນໆທີ່ເຂົ້າຮ່ວມໃນການສຶກສາ ຫຼື ການດູແລເບິ່ງແຍງນັກຮຽນ.

## ລະບົບການຊ່ວຍເຫຼືອແບບມີຫຼາຍຊັ້ນ, ລວມທັງການຕອບສະໜອງຕໍ່ການແຊກແຊງຊ່ວຍເຫຼືອ

ໂຮງຮຽນແຕ່ລະຈຳເປັນຕ້ອງນຳໃຊ້ລະບົບການຊ່ວຍເຫຼືອແບບມີຫຼາຍຊັ້ນ (**MTSS**) ກ່ຽວກັບການບໍລິການແຊກແຊງຊ່ວຍເຫຼືອ ແລະ ສະໜັບສະໜູນ, ເຊິ່ງປະກອບດ້ວຍການສະໜັບສະໜູນທາງວິຊາການ ແລະ ບໍ່ແມ່ນວິຊາການ ເຊັ່ນ: ການສະໜັບສະໜູນດ້ານພຶດຕິກຳ. ການຕອບສະໜອງຕໍ່ການແຊກແຊງຊ່ວຍເຫຼືອ (**RtI**) ແມ່ນວິທີການທີ່ບັນດາໂຮງຮຽນຫຼາຍແຫ່ງນຳໃຊ້ໃນ MTSS ຂອງພວກເຂົາ. ອົງປະກອບພື້ນຖານຂອງວິທີການ RtI ຄື: ສະໜອງການສອນທີ່ເປັນວິທະຍາສາດເຊິ່ງອີງຕາມການຄົ້ນຄວ້າ ແລະ ການແຊກແຊງໃນຫ້ອງຮຽນສຶກສາທົ່ວໄປ; ຕິດຕາມ ແລະ ວັດແທກຄວາມຄືບໜ້າຂອງເດັກນ້ອຍເພື່ອຕອບໂຕ້ຕໍ່ການແຊກແຊງ; ແລະ ການນຳໃຊ້ຜົນວັດແທກຄວາມຄືບໜ້າເຫຼົ່ານີ້ເພື່ອຕັດສິນໃຈກ່ຽວກັບການສຶກສາ.

ວິທີການ RtI, ໃນນາມເປັນສ່ວນໜຶ່ງຂອງລະບົບ MTSS, ແມ່ນວິທີການທີ່ແຕ່ລະລະດັບ ຫຼື ຊັ້ນ ຈະສະແດງລະດັບການແຊກແຊງຊ່ວຍເຫຼືອທີ່ເຂັ້ມຂຸ້ນຂຶ້ນ. ການແຊກແຊງທີ່ສະໜອງໃຫ້ແກ່ເດັກນ້ອຍຈະສືບຕໍ່ປັບປຸງໂດຍອີງຕາມຄວາມຄືບໜ້າທີ່ໄດ້ຮັບການຕິດຕາມຈົນກວ່າເດັກນ້ອຍຄົນດັ່ງກ່າວຈະພັດທະນາໄດ້ໂດຍພໍປະມານ. ເດັກນ້ອຍທີ່ບໍ່ໄດ້ຕອບສະໜອງຕໍ່ການແຊກແຊງໃນເບື້ອງຕົ້ນພາຍໃນເວລາທີ່ເໝາະສົມແມ່ນຖືກສົ່ງຕໍ່ໃຫ້ແກ່ການແຊກແຊງທີ່ເອົາຈິງເອົາຈັງຂຶ້ນກວ່າເກົ່າ. ຫຼາຍຄັ້ງ, ໂຮງຮຽນຂອງທ່ານຈະມີຂໍ້ມູນພຽງພໍ ຫຼັງຈາກອາທິດທີຫົກຂອງການແຊກແຊງ ເພື່ອດຳເນີນການຕັດສິນໃຈໃນຂັ້ນຕອນຖັດໄປ (ເຊັ່ນ: ສືບຕໍ່ການແຊກແຊງຊ່ວຍເຫຼືອ, ເພີ່ມລະດັບຄວາມຮຸນແຮງຂອງການແຊກແຊງ, ສົ່ງຕໍ່ສຳລັບການປະເມີນ). ກຳນົດເວລາສຳລັບການຕັດສິນໃຈແມ່ນຂຶ້ນກັບຄວາມຖີ່/ໄລຍະເວລາຂອງການແຊກແຊງ ແລະ ທັກສະທີ່ແນໃສ່.

ເດັກນ້ອຍທີ່ບໍ່ຈຳເປັນຕ້ອງກ້າວຜ່ານແຕ່ລະຂັ້ນຂອງລະບົບ RtI ກ່ອນຈະມີການສົ່ງຕໍ່ໃຫ້ແກ່ການສຶກສາພິເສດ. ທັນທີທີ່ມັນປາກົດເປັນທີ່ຊັດເຈນວ່າການແຊກແຊງໃນການສຶກສາທົ່ວໄປບໍ່ພຽງພໍ, ພະນັກງານໂຮງຮຽນຄວນຕັ້ງຂໍ້ສົງໄສວ່າ ເດັກນ້ອຍຄົນດັ່ງກ່າວມີຄວາມພິການ ແລະ ຕ້ອງເລີ່ມຕົ້ນສົ່ງຕໍ່. ການພິຈາລະນາທີ່ສຳຄັນເພື່ອຕັດສິນວ່າການແຊກແຊງໃນການສຶກສາທົ່ວໄປພຽງພໍ ຫຼື ບໍ່ ແມ່ນລວມເຖິງການທົບທວນປະຫວັດການແຊກແຊງ ແລະ ຂໍ້ມູນຕິດຕາມຄວາມຄືບໜ້າຂອງນັກຮຽນ (ອັດຕາຄວາມຄືບໜ້າໃນປັດຈຸບັນ ແລະ ການເຄື່ອນໄຫວສູ່ການປິດຊ່ອງວ່າງຄວາມສຳເລັດ). ພໍ່ແມ່ຍັງສາມາດຮຽກຮ້ອງໃຫ້ມີການສົ່ງຕໍ່ໃນເວລາໃດກໍໄດ້ ບໍ່ວ່າເດັກນ້ອຍຄົນດັ່ງກ່າວກຳລັງໄດ້ຮັບການແຊກແຊງຜ່ານລະບົບ RtI ຫຼື ບໍ່. ລະບົບ RtI ອາດບໍ່ຖືກນຳໃຊ້ເພື່ອຖ່ວງດຶງ ຫຼື ປະຕິເສດການປະເມີນຕາມເວລາຂອງເດັກນ້ອຍທີ່ຖືກສົງໄສວ່າພິການພາຍໃຕ້ IDEA. ຂໍ້ມູນເພີ່ມຕື່ມກ່ຽວກັບຂະບວນການ RtI ສາມາດຫາໄດ້ທີ່ (ລິ້ງເຊື່ອມຕໍ່: bit.ly/3nDMTDu).

## ການສົ່ງຕໍ່ເພື່ອປະເມີນໃນເບື້ອງຕົ້ນ

ໂຮງຮຽນມີໜ້າທີ່ຕ້ອງຂໍການຍິນຍອມຈາກທ່ານ ແລະ ດຳເນີນການການປະເມີນຜົນໃນເບື້ອງຕົ້ນສຳລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ໃນເວລາໃດກໍຕາມທີ່ຕົນສົງໄສວ່າລູກຂອງທ່ານພິການ ແລະ ຕ້ອງການການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງພາຍໃຕ້ IDEA. ທ່ານຍັງສາມາດຮ້ອງຂໍການປະເມີນຜົນໃນເບື້ອງຕົ້ນຂອງລູກຂອງທ່ານໃນເວລາໃດກໍໄດ້.

ຖ້າທ່ານສົ່ງຄຳຮ້ອງເປັນລາຍລັກອັກສອນໃຫ້ກັບຜູ້ອຳນວຍການຂອງການບໍລິການການສຶກສາພິເສດຂອງໜ່ວຍງານການສຶກສາທ້ອງຖິ່ນ (LEA) ຫຼື ໃຫ້ກັບພະນັກງານບໍລິຫານຂອງເມືອງ ເຊັ່ນວ່າ: ຜູ້ອຳນວຍການວິທະຍາເຂດ ສຳລັບການປະເມີນຜົນໃນເບື້ອງຕົ້ນສຳລັບການມີສິດໄດ້ຮັບການບໍລິການການສຶກສາພິເສດ, ໂຮງຮຽນຕ້ອງໃຫ້ສິ່ງດັ່ງຕໍ່ໄປນີ້ແກ່ທ່ານບໍ່ໃຫ້ກາຍວັນທີ 15 ຂອງມື້ຮຽນຫຼັງຈາກວັນທີທີ່ໂຮງຮຽນໄດ້ຮັບຄຳຮ້ອງ: 1) ແຈ້ງການເປັນລາຍລັກອັກສອນເຖິງການສະເໜີຂອງຕົນທີ່ຈະດຳເນີນການປະເມີນຜົນ, ສຳເນົາຂອງ *ແຈ້ງການກ່ຽວກັບມາດຕະການປ້ອງກັນຕາມຂັ້ນຕອນ* (ລິ້ງເຊື່ອມຕໍ່: fw.escapps.net), ສຳເນົາຂອງແບບຟອມ *ພາບລວມກ່ຽວກັບການສຶກສາພິເສດສຳລັບພໍ່ແມ່* ທີ່ TEA ສ້າງຂຶ້ນ ແລະ ໂອກາດທີ່ຈະຂຽນໃບຍິນຍອມເປັນລາຍລັກອັກສອນໃຫ້ແກ່ການປະເມີນຜົນ ຫຼື 2) ແຈ້ງການລ່ວງໜ້າທີ່ເປັນລາຍລັກອັກສອນກ່ຽວກັບການປະຕິເສດທີ່ຈະປະເມີນຜົນລູກຂອງທ່ານ, ສຳເນົາຂອງ *ແຈ້ງການເຖິງການຄຸ້ມກັນຂະບວນການ* (ລິ້ງເຊື່ອມຕໍ່: fw.escapps.net), ແລະ ສຳເນົາຂອງແບບຟອມ *ພາບລວມກ່ຽວກັບ ການສຶກສາພິເສດສຳລັບພໍ່ແມ່* ທີ່ TEA ໄດ້ສ້າງຂຶ້ນ. ເມື່ອໂຮງຮຽນເລີ່ມການນຳສົ່ງຕໍ່ສຳລັບການປະເມີນຜົນ, ໂຮງຮຽນຍັງຈຳເປັນຕ້ອງໃຫ້ຂໍ້ມູນນີ້ແກ່ທ່ານອີກດ້ວຍ.

ກະລຸນາຮັບຊາບວ່າ ຄໍາຮ້ອງເພື່ອໃຫ້ປະເມີນຜົນການສຶກສາພິເສດອາດເກີດຂຶ້ນທາງວາຈາ ແລະ ບໍ່ຈໍາເປັນຕ້ອງຂຽນເປັນລາຍລັກອັກສອນ. ໂຮງຮຽນປະຈໍາເມືອງ ແລະ ໂຮງຮຽນເອກະສິດຕ້ອງປະຕິບັດຕາມທຸກເງື່ອນໄຂແຈ້ງການຂອງ ລັດຖະບານກາງ ແລະ ເງື່ອນໄຂໃນການລະບຸ, ກໍານົດ ແລະ ປະເມີນເດັກນ້ອຍທີ່ຖືກຕັ້ງຂໍ້ສົງໄສວ່າເປັນເດັກນ້ອຍທີ່ພິການ ແລະ ຕ້ອງການການສຶກສາພິເສດ.
ບໍ່ມີເງື່ອນໄຂກໍານົດເວລາທີ່ສະເພາະເພື່ອຕອບໂຕ້ການຮ້ອງຂໍທີ່ເປັນວາຈາ, ແຕ່ສົ່ງເສີມໃຫ້ໂຮງຮຽນປະຕິບັດຕາມກໍານົດເວລາຕອບໂຕ້ 15 ມື້ໄປໂຮງຮຽນຕາມທີ່ອະທິບາຍໄວ້ຂ້າງເທິງ.

## ແຈ້ງການລ່ວງໜ້າເປັນລາຍລັກອັກສອນ

ໜຶ່ງໃນສິດທິຂອງທ່ານພາຍໃຕ້ IDEA ແມ່ນເພື່ອຮັບແຈ້ງການລວ່ງໜ້າທີ່ເປັນລາຍລັກອັກສອນກ່ຽວກັບການກະທໍາ ຫຼື ການບໍ່ດໍາເນີນການທີ່ກ່ຽວຂ້ອງກັບລູກຂອງທ່ານໃນເວລາທີ່ເໝາະສົມກ່ອນທີ່ໂຮງຮຽນຈະດໍາເນີນການຕົວຈິງ ຫຼື ປະຕິເສດທີ່ຈະດໍາເນີນການ. ໂດຍສະເພາະແລ້ວ, ໂຮງຮຽນຕ້ອງສົ່ງແຈ້ງການລ່ວງໜ້າເປັນລາຍລັກອັກສອນເປັນພາສາໂດຍກໍາເນີດຂອງທ່ານ ຫຼື ຮູບແບບການສື່ສານອື່ນໆ ເມື່ອຕົນ:

- ນໍາສະເໜີໃຫ້ເລີ່ມຕົ້ນ ຫຼື ປ່ຽນແປງໂປຣແກຣມການສຶກສາທີ່ລະບຸ, ປະເມີນຜົນ ຫຼື ການສັບປ່ຽນລູກຂອງທ່ານໃນການສຶກສາ ຫຼື ການສະໜອງ FAPE ໃຫ້ແກ່ລູກຂອງທ່ານ (ລວມເຖິງ ການປ່ຽນແປງທີ່ໄດ້ຮັບການກະຕຸ້ນຈາກການທີ່ທ່ານຍົກເລີກບໍ່ຮັບເອົາການຍິນຍອມສໍາລັບການສະໜອງທີ່ສືບຕໍ່ຂອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ); ຫຼື
- ປະຕິເສດທີ່ຈະເລີ່ມຕົ້ນ ຫຼື ປ່ຽນແປງໂປຣແກຣມການສຶກສາທີ່ລະບຸ ແລະ ປະເມີນຜົນ ຫຼື ການສັບປ່ຽນລູກຂອງທ່ານໃນການສຶກສາ ຫຼື ການສະໜອງ FAPE ໃຫ້ແກ່ລູກຂອງທ່ານ.

ການແຈ້ງການລ່ວງໜ້າເປັນລາຍລັກອັກສອນຕ້ອງສົ່ງໃຫ້ຢ່າງໜ້ອຍຫ້າມື້ຮຽນກ່ອນຈະມີການກະທໍາທີ່ໂຮງຮຽນນໍາສະເໜີ ຫຼື ປະຕິເສດ, ນອກຈາກທ່ານເຫັນພ້ອມຕໍ່ໄລຍະເວລາທີ່ສັ້ນລົງ. ໂຮງຮຽນຕ້ອງສະໜອງການແຈ້ງການລ່ວງໜ້າເປັນລາຍລັກອັກສອນໃຫ້ແກ່ທ່ານບໍ່ວ່າທ່ານເຫັນພ້ອມ ຫຼື ຮຽກຮ້ອງການປ່ຽນແປງ ຫຼື ບໍ່.

ການແຈ້ງການລ່ວງໜ້າເປັນລາຍລັກອັກສອນຕ້ອງປະກອບມີຂໍ້ມູນດັ່ງຕໍ່ໄປນີ້:

(1) ຄໍາອະທິບາຍການດໍາເນີນການທີ່ຖືກສະເໜີ ຫຼື ປະຕິເສດໂດຍໂຮງຮຽນ;
(2) ຄໍາອະທິບາຍວ່າເປັນຫຍັງໂຮງຮຽນຈຶ່ງສະເໜີ ຫຼື ປະຕິເສດທີ່ຈະດໍາເນີນການ;
(3) ຄໍາອະທິບາຍຂະບວນການປະເມີນຜົນ, ການຕີລາຄາ, ການບັນທຶກ ຫຼື ການລາຍງານແຕ່ລະຢ່າງທີ່ໂຮງຮຽນນໍາໃຊ້ເປັນພື້ນຖານສໍາລັບການສະເໜີ ຫຼື ການປະຕິເສດທີ່ຈະດໍາເນີນການ;
(4) ຖະແຫຼງການທີ່ພໍ່ແມ່ຂອງເດັກນ້ອຍພິການໄດ້ຮັບຄວາມຄຸ້ມຄອງພາຍໃຕ້ການຄຸ້ມຄອງຕາມຂັ້ນຕອນຂອງສ່ວນນີ້ ແລະ ຖ້າແຈ້ງການນີ້ບໍ່ແມ່ນການສົ່ງຕໍ່ເບື້ອງຕົ້ນເພື່ອການປະເມີນຜົນ, ສາມາດຮັບວິທີການສໍາເນົາຄໍາອະທິບາຍຂອງການປ້ອງກັນຕາມຂັ້ນຕອນໄດ້;
(5) ແຫຼ່ງທີ່ໃຫ້ຜູ້ປົກຄອງຕິດຕໍ່ຂໍຮັບຄວາມຊ່ວຍເຫຼືອໃນການທໍາຄວາມເຂົ້າໃຈຂໍ້ກໍານົດການສຶກສາພິເສດ;
(6) ຄໍາອະທິບາຍທາງເລືອກອື່ນໆທີ່ຄະນະກໍາມະການ ARD ພິຈາລະນາ ແລະ ເຫດຜົນທີ່ ວ່າເປັນຫຍັງຈຶ່ງປະຕິເສດທາງເລືອກເຫຼົ່ານັ້ນ ແລະ
(7) ຄໍາອະທິບາຍປັດໃຈອື່ນໆທີ່ກ່ຽວຂ້ອງກັບການສະເໜີ ຫຼື ການປະຕິເສດຂອງໂຮງຮຽນ.

## ການຍິນຍອມໂດຍພໍ່ແມ່

ມີກິດຈະກໍາບາງຢ່າງໃນຂະບວນການສຶກສາພິເສດທີ່ບໍ່ສາມາດເກີດຂຶ້ນໄດ້ນອກຈາກໂຮງຮຽນຈະໄດ້ຮັບການຍິນຍອມຂອງທ່ານ. ໂຮງຮຽນຕ້ອງແຈ້ງການໃຫ້ແກ່ທ່ານຢ່າງຄົບຖ້ວນກ່ຽວກັບຂໍ້ມູນທັງໝົດທີ່ຈໍາເປັນເພື່ອຕັດສິນໃຈຢ່າງຖືກຕ້ອງເຊິ່ງລວມເຖິງຄໍາອະທິບາຍຂອງກິດຈະກໍາທີ່ນໍາສະເໜີ.

ຂໍ້ມູນດັ່ງກ່າວຕ້ອງເປັນພາສາໂດຍກຳເນີດຂອງທ່ານ ຫຼື ຮູບແບບການສື່ສານອື່ນໆ ນອກຈາກຈະສາມາດໃຫ້ຂໍ້ມູນໃນລັກສະນະນີ້ໄດ້ຢ່າງຊັດເຈນ. ຖ້າມີບົດບັນທຶກໃຫ້ເປີດເຜີຍ, ໂຮງຮຽນຕ້ອງລົງລາຍການບົດບັນທຶກ ແລະ ພວກມັນຈະຖືກເປີດເຜີຍໃຫ້ແກ່ຜູ້ໃດ.

ເມື່ອທ່ານຍິນຍອມ, ມັນໝາຍຄວາມວ່າທ່ານໄດ້ເຂົ້າໃຈ ແລະ ເຫັນດ້ວຍເປັນລາຍລັກອັກສອນໃຫ້ໂຮງຮຽນປະຕິບັດກິດຈະກຳທີ່ລະບຸໄວ້ໃນການຍິນຍອມຂອງທ່ານ. ມັນສຳຄັນທີ່ທ່ານຕ້ອງເຂົ້າໃຈວ່າ ການຍິນຍອມເປັນເລື່ອງສະໝັກໃຈ ແລະ ອາດຖືກຍົກເລີກໃນເວລາໃດກໍໄດ້ກ່ອນທີ່ກິດຈະກຳຈະເກີດຂຶ້ນ. ເຖິງຢ່າງໃດກໍຕາມ, ຖ້າທ່ານຍົກເລີກການຍິນຍອມສຳລັບກິດຈະກຳໃດໜຶ່ງ, ມັນບໍ່ສາມາດມີຜົນຍ້ອນຫຼັງ.

ສິ່ງດັ່ງຕໍ່ໄປນີ້ແມ່ນຕົວຢ່າງຂອງກິດຈະກຳທີ່ຮຽກຮ້ອງໃຫ້ທ່ານຍິນຍອມ:

- ການປະເມີນລູກຂອງທ່ານເປັນຄັ້ງທຳອິດ;
- ການປະເມີນລູກຂອງທ່ານຄັ້ງລະທຸກໆສາມປີ ຫຼື ການປະເມີນຄືນເລື້ອຍໆຂຶ້ນ ຖ້າຈຳເປັນຕ້ອງມີຂໍ້ມູນເພີ່ມຕື່ມ ແລະ ທ່ານ ຫຼື ອາຈານຂອງລູກຂອງທ່ານຮ້ອງຂໍໃຫ້ມີການປະເມີນຄືນ;
- ການສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງເປັນຄັ້ງທຳອິດ;
- ການຍົກເວັ້ນສະມາຊິກຄົນໃດໜຶ່ງຂອງຄະນະກຳມະການ ARD ບໍ່ໃຫ້ເຂົ້າຮ່ວມການປະຊຸມຄະນະກຳມະການ ARD ເມື່ອການປະຊຸມປະກອບມີການແກ້ໄຂ ຫຼື ການສົນທະນາຂົງເຂດຫຼັກສູດຂອງສະມາຊິກ ຫຼື ການບໍລິການທີ່ກ່ຽວຂ້ອງ; ແລະ
- ການເຊີນໃຫ້ຕົວແທນຂອງໜ່ວຍງານທີ່ເຂົ້າຮ່ວມໃດໜຶ່ງເຊິ່ງມີຄວາມເປັນໄປໄດ້ທີ່ຈະຮັບຜິດຊອບໃນການສະໜອງ ຫຼື ຈ່າຍໃຫ້ແກ່ການບໍລິການການປ່ຽນແປງໃນໂຮງຮຽນມັດທະຍົມ.

## ຂະບວນການປະເມີນຜົນ

ຖ້າທ່ານໃຫ້ການຍິນຍອມເຫັນດີແກ່ການປະເມີນຜົນຢ່າງຄົບຖ້ວນ ແລະ ແບບບຸກຄົນ (**FIIE**), ໂຮງຮຽນຕ້ອງໄດ້ໃຫ້ແຈ້ງການລ່ວງໜ້າເປັນລາຍລັກອັກສອນກ່ຽວກັບຂັ້ນຕອນການປະເມີນ ທີ່ໂຮງຮຽນຈະດຳເນີນການ. ໂຮງຮຽນຕ້ອງໃຊ້ເຄື່ອງມື ແລະ ຍຸດທະສາດການປະເມີນທີ່ຫຼາກຫຼາຍ ເພື່ອຮັບເອົາຂໍ້ມູນດ້ານໜ້າທີ່ການ, ພັດທະນາການ ແລະ ດ້ານການສຶກສາກ່ຽວກັບລູກຂອງທ່ານເຊິ່ງລວມເຖິງຂໍ້ມູນທີ່ທ່ານສະໜອງໃຫ້. ໂຮງຮຽນຂອງລູກທ່ານອາດບໍ່ໃຊ້ມາດຕະການ ຫຼື ການປະເມີນໃດໜຶ່ງເປັນມາດຕະເກນຢ່າງດຽວເພື່ອກຳນົດວ່າລູກຂອງທ່ານເປັນເດັກພິການ ຫຼື ບໍ່ ແລະ ເພື່ອກຳນົດໂປຣແກຣມການສຶກສາທີ່ເໝາະສົມສຳລັບລູກຂອງທ່ານ. ໂຮງຮຽນຂອງທ່ານຕ້ອງດຳເນີນການປະເມີນລູກຂອງທ່ານໃນທຸກຂົງເຂດທີ່ກ່ຽວຂ້ອງກັບຄວາມພິການທີ່ສົງໄສ ເພື່ອກຳນົດວ່າລູກຂອງທ່ານພິການ ແລະ ເພື່ອກຳນົດຄວາມຕ້ອງການດ້ານການສຶກສາຂອງລາວ. ຂະບວນການປະເມີນຜົນສຳລັບລູກຂອງທ່ານຕ້ອງ:

- ປະກອບມີຂໍ້ມູນກ່ຽວກັບຜົນການດຳເນີນງານດ້ານການສຶກສາ, ການພັດທະນາ ແລະ ການເຮັດວຽກຂອງລູກຂອງທ່ານ;
- ຖືກບໍລິຫານໂດຍພະນັກງານທີ່ຜ່ານການອົບຮົມ ແລະ ມີຄວາມຮູ້ຕາມຄຳສັ່ງຂອງຜູ້ຜະລິດບົດສອບເສັງ ແລະ ຖືກບໍລິຫານສຳລັບຈຸດປະສົງທີ່ການປະເມີນຖືກຕ້ອງ ແລະ ເພິ່ງພາໄດ້;
- ຖືກບໍລິການເປັນພາສາໂດຍກຳເນີດຂອງລູກຂອງທ່ານ ຫຼື ຮູບແບບການສື່ສານອື່ນໆ; ແລະ
- ບໍ່ລຳອຽງ ຫຼື ໃຫ້ໃນລັກສະນະທີ່ບໍ່ຈຳແນກລູກຂອງທ່ານ ຍ້ອນເບື້ອງຫຼັງວັດທະນະທຳຂອງລາວ, ເຊື້ອຊາດ ຫຼື ຄວາມພິການ.

ບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄວາມຮູ້ທີ່ກ່ຽວຂ້ອງກັບການປະເມີນຜົນຈະແຕກຕ່າງກັນໄປ ໂດຍອີງໃສ່ຄວາມພິການທີ່ສົງໃສ. ຖ້າສົງໄສວ່າເປັນໂລກບົກພ່ອງໃນການຮຽນຮູ້ ຫຼື ພາວະຜິດປົກກະຕິທີ່ກ່ຽວຂ້ອງ, ບຸກຄະລາກອນທີ່ມີຄວາມຮູ້ສະເພາະດ້ານກ່ຽວກັບຂະບວນການອ່ານ, ໂລກບົກພ່ອງໃນການຮຽນຮູ້ ຫຼື ພາວະຜິດປົກກະຕິທີ່ກ່ຽວຂ້ອງ ແລະ ຄຳແນະນຳກ່ຽວກັບໂລກບົກພ່ອງໃນການຮຽນຮູ້ ຈະມີເຂົ້າມາມີສ່ວນຮ່ວມໃນການປະເມີນຜົນ. ນອກຈາກນັ້ນ, ການປະເມີນຜົນຈຳເປັນຕ້ອງລວມເຖິງຂົງເຂດທີ່ຈຳເປັນຢູ່ໃນປຶ້ມຄູ່ມືກ່ຽວກັບໂລກບົກພ່ອງໃນການຮຽນຮູ້ຂອງສະພາການສຶກສາຂອງລັດເທັກຊັດ (ລິ້ງເຊື່ອມຕໍ່: https://bit.ly/3Z5uXrt) ແລະ 19 ປະມວນກົດໝາຍຂອງລັດເທັກຊັດ (TAC) §74.28 (ລິ້ງເຊື່ອມຕໍ່: https://bit.ly/3YQcWMe).

ການປະເມີນຜົນໃນເບື້ອງຕົ້ນ ແລະ ບົດລາຍງານຕ້ອງສຳເລັດບໍ່ກາຍ 45 ມື້ຮຽນ ຫຼັງຈາກວັນທີທີ່ໂຮງຮຽນໄດ້ຮັບການຍິນຍອມເປັນລາຍລັກອັກສອນຂອງທ່ານ. ເຖິງຢ່າງໃດກໍຕາມ, ຖ້າລູກຂອງທ່ານຂາດໂຮງຮຽນເປັນເວລາສາມມື້ຮຽນ ຫຼື ຫຼາຍກວ່ານັ້ນ ໃນລະຫວ່າງຊ່ວງການປະເມີນຜົນເປັນເວລາສາມມື້ຮຽນ ຫຼື ຫຼາຍກວ່ານັ້ນ, ຊ່ວງການປະເມີນຜົນຈະຂະຫຍາຍຕາມຈຳນວນມື້ຮຽນທີ່ເທົ່າກັບຈຳນວນມື້ຮຽນທີ່ລູກຂອງທ່ານຂາດຮຽນ. ໂຮງຮຽນຕ້ອງໃຫ້ສຳເນົາບົດລາຍງານການປະເມີນຜົນແກ່ທ່ານ ໂດຍບໍ່ເສຍຄ່າໃນທັນທີທີ່ເປັນໄປໄດ້ຫຼັງຈາກການປະເມີນຜົນສຳເລັດ ແຕ່ບໍ່ໃຫ້ເກີນຫ້າວັນເຂົ້າໂຮງຮຽນກ່ອນກອງປະຊຸມຄະນະກຳມະການ ARD ເບື້ອງຕົ້ນຂອງລູກທ່ານ ເພື່ອກຳນົດການມີສິດໄດ້ຮັບ.

ຖ້າລູກຂອງທ່ານອາຍຸຕ່ຳກວ່າຫ້າປີພາຍໃນວັນທີ 1 ເດືອນກັນຍາຂອງສົກຮຽນ ແລະ ບໍ່ໄດ້ລົງທະບຽນຮຽນໃນໂຮງຮຽນລັດ ຫຼື ລົງທະບຽນຮຽນໃນໂຮງຮຽນເອກະຊົນ ຫຼື ສະພາບແວດລ້ອມໂຮງຮຽນຕາມເຮືອນໂດຍບໍ່ກ່ຽວຂ້ອງກັບອາຍຸ, ການປະເມີນຜົນໃນເບື້ອງຕົ້ນ ແລະ ບົດລາຍງານຜົນຕ້ອງສຳເລັດບໍ່ກາຍ 45 ວັນເຂົ້າໂຮງຮຽນ ຫຼັງຈາກວັນທີທີ່ໂຮງຮຽນໄດ້ຮັບການຍິນຍອມເປັນລາຍລັກອັກສອນຂອງທ່ານ.

ມີຂໍ້ຍົກເວັ້ນຕໍ່ໄລຍະເວລາ 45 ວັນເຂົ້າໂຮງຮຽນ. ຖ້າໂຮງຮຽນໄດ້ຮັບການຍິນຍອມຂອງທ່ານສຳລັບການປະເມີນຜົນໃນເບື້ອງຕົ້ນຢ່າງໜ້ອຍ 35 ແຕ່ຕ່ຳກວ່າ 45 ມື້ກ່ອນມື້ສອນຄັ້ງສຸດທ້າຍຂອງສົກປີ. ບົດລາຍງານການປະເມີນຜົນທີ່ເປັນລາຍລັກອັກສອນຕ້ອງຖືກເຮັດໃຫ້ສຳເລັດ ແລະ ມອບໃຫ້ທ່ານພາຍໃນວັນທີ 30 ເດືອນມິຖຸນາຂອງປີນັ້ນ. ເຖິງຢ່າງໃດກໍຕາມ, ຖ້າລູກຂອງທ່ານຂາດໂຮງຮຽນເປັນເວລາສາມມື້ ຫຼື ຫຼາຍກວ່ານັ້ນໃນລະຫວ່າງຊ່ວງປະເມີນຜົນ, ຈະບໍ່ສາມາດນຳໃຊ້ວັນທີກຳນົດໃນວັນທີ 30 ເດືອນມິຖຸນາໄດ້. ກົງກັນຂ້າມ ແມ່ນຈະນຳໃຊ້ຊ່ວງເວລາທົ່ວໄປ 45 ມື້ຮຽນບວກມື້ທີ່ຖືກຍື່ນເວລາສຳລັບການຂາດເປັນເວລາສາມມື້ ຫຼື ຫຼາຍກວ່ານັ້ນ. ຖ້າໂຮງຮຽນໄດ້ຮັບການຍິນຍອມເຫັນດີຈາກທ່ານໜ້ອຍກວ່າ 35 ວັນເຂົ້າໂຮງຮຽນກ່ອນວັນເຂົ້າໂຮງຮຽນສຸດທ້າຍຂອງປີຮຽນ, ແມ່ນຈະນຳໃຊ້ກຳນົດເວລາທົ່ວໄປ 45 ວັນຂອງ 45 ວັນເຂົ້າໂຮງຮຽນ, ພ້ອມດ້ວຍການຂະຫຍາຍເວລາດຽວກັນສຳລັບການຂາດຮຽນສາມຄັ້ງ ຫຼື ຫຼາຍກວ່ານັ້ນ ຢູ່ໃນໄລຍະເວລາການປະເມີນ.

ຖ້າທ່ານບໍ່ຍິນຍອມຕໍ່ການປະເມີນຜົນໃນເບື້ອງຕົ້ນ, ໂຮງຮຽນອາດແຕ່ບໍ່ຈຳເປັນຕ້ອງສະແຫວງຫາການປະເມີນຜົນໂດຍ ຂໍໃຫ້ມີການປະນີປະນອມ ຫຼື ຮຽກຮ້ອງໃຫ້ມີຂະບວນການພິຈາລະນາຕາມຄວາມເໝາະສົມ. ຖ້າໂຮງຮຽນຕັດສິນໃຈທີ່ຈະບໍ່ສະແຫວງຫາການປະເມີນຜົນ, ໂຮງຮຽນບໍ່ໄດ້ລະເມີດເງື່ອນໄຂພາຍໃຕ້ IDEA ເພື່ອລະບຸ, ກຳນົດ ແລະ ປະເມີນຜົນ ເດັກນ້ອຍທັງໝົດທີ່ພິການຜູ້ເຊິ່ງຕ້ອງການການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ. ເງື່ອນໄຂນີ້ແມ່ນຖືກເອີ້ນວ່າໜ້າທີ່ການຄົ້ນພົບເດັກນ້ອຍຂອງໂຮງຮຽນ.

## ກອງປະຊຸມຂອງຄະນະກຳມະການຮັບຜິດຊອບການຮັບເຂົ້າຮຽນ, ການກວດສອບ ແລະ ການໄລ່ອອກ

ພາຍໃນສາມສິບວັນປະຕິທິນນັບຕັ້ງແຕ່ວັນທີ່ເຮັດບົດລາຍງານການປະເມີນຜົນເບື້ອງຕົ້ນສຳເລັດ, ຕ້ອງມີການຕັ້ງຄະນະກຳມະການ ARD ຂຶ້ນມາເພື່ອພິຈາລະນາບົດລາຍງານ ແລະ ກຳນົດວ່າລູກຂອງທ່ານມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ຫຼື ບໍ່. ສະມາຊິກຄະນະກຳມະການ ARD ປະກອບມີບຸກຄົນດັ່ງຕໍ່ໄປນີ້:

- ທ່ານທີ່ເປັນພໍ່ແມ່;
- ຢ່າງໜ້ອຍຄູອາຈານສອນການສຶກສາທົ່ວໄປຂອງເດັກຕ້ອງເປັນຄູອາຈານທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດສ່ວນໜຶ່ງຂອງ IEP ຂອງເດັກ ເມື່ອເປັນໄປໄດ້;
- ຢ່າງໜ້ອຍຄູອາຈານສອນການສຶກສາພິເສດໜຶ່ງຄົນ ຫຼື ຜູ້ສະໜອງໃຫ້ແກ່ເດັກນ້ອຍ;
- ຕົວແທນໂຮງຮຽນ;
- ບຸກຄົນທີ່ສາມາດຕີຄວາມໝາຍການນຳໃຊ້ຜົນການປະເມີນຕາມຄຳສັ່ງ;
- ບຸກຄົນອື່ນໆທີ່ມີຄວາມຮູ້ ຫຼື ຄວາມຊຳນານພິເສດກ່ຽວກັບເດັກນ້ອຍ ແລະ ຖືກເຊີນໂດຍທ່ານ ຫຼື ໂຮງຮຽນ;
- ເດັກນ້ອຍເມື່ອໃດກໍຕາມທີ່ເໝາະສົມ;
- ໃນຂອບເຂດທີ່ເໝາະສົມ, ດ້ວຍການຍິນຍອມເປັນລາຍລັກອັກສອນຂອງທ່ານ ຫຼື ຫຼັງຈາກທີ່ລູກຂອງທ່ານ ຮອດອາຍຸ 18 ປີ, ໂດຍມີການຍິນຍອມເປັນລາຍລັກອັກສອນຈາກເດັກນ້ອຍຜູ້ໃຫຍ່ຂອງທ່ານ, ຕົວແທນຂອງໜ່ວຍງານທີ່ເຂົ້າຮ່ວມທີ່ມີແນວໂນ້ມທີ່ຈະຮັບຜິດຊອບໃນການສະໜອງ ຫຼື ຈ່າຍສຳລັບການບໍລິການໃນການປ່ຽນແປງ;
- ຕົວແທນຈາກໜ່ວຍງານການສຶກສາດ້ານວິຊາຊີບ ແລະ ວິຊາການ ໂດຍສະເພາະແມ່ນຄູອາຈານ ຖ້າເດັກນ້ອຍຖືກພິຈາລະນາໃຫ້ບັນຈຸໃນເບື້ອງຕົ້ນ ຫຼື ສືບຕໍ່ໃນໜ່ວຍງານການສຶກສາດ້ານວິຊາຊີບ ຫຼື ວິຊາການ; ແລະ
- ສະມາຊິກພະນັກງານທີ່ເປັນມືອາຊີບ ຜູ້ທີ່ຢູ່ໃນຄະນະກຳມະການປະເມີນຄວາມຊ່ຽວຊານດ້ານພາສາ, ຖ້າເດັກຖືກລະບຸວ່າເປັນເດັກສອງພາສາຂັ້ນເລີ່ມຕົ້ນ.

ຄະນະກຳມະການ ARD ຍັງປະກອບມີບຸກຄົນດັ່ງຕໍ່ໄປນີ້ຕາມຄວາມເໝາະສົມ:

- ຄູອາຈານທີ່ໄດ້ຮັບການຮອງຮັບໃນການສຶກສານັກຮຽນທີ່ຫູໜວກ ຫຼື ລຳບາກໃນການໄດ້ຍິນ ຖ້າເດັກນ້ອຍຖືກຕັ້ງຂໍ້ສົງໄສ ຫຼື ຖືກບັນທຶກວ່າຫູໜວກ ຫຼື ລຳບາກໃນການໄດ້ຍິນ;

- ຖ້າເດັກນ້ອຍຖືກຕັ້ງຂໍ້ສົງໄສ ຫຼື ຖືກບັນທຶກວ່າມີຄວາມບົກຜ່ອງດ້ານການເບິ່ງເຫັນ;
- ຄູອາຈານທີ່ໄດ້ຮັບການຮອງຮັບໃນການສຶກສານັກຮຽນທີ່ມີຄວາມບົກຜ່ອງດ້ານການເບິ່ງເຫັນ ແລະ ຄູອາຈານທີ່ໄດ້ຮັບການຮອງຮັບໃນການສຶກສານັກຮຽນທີ່ຫູໜວກ ຫຼື ລຳບາກໃນການໄດ້ຍິນ ຖ້າເດັກນ້ອຍຖືກຕັ້ງຂໍ້ສົງໄສ ຫຼື ຖືກບັນທຶກວ່າຫູໜວກ-ຕາບອດ ຫຼື
- ຜູ້ຊ່ຽວຊານທີ່ບັນລຸໄດ້ຕາມຂໍ້ກຳນົດຂອງ TEC, §29.0031(b) ແລະ 19 TAC §74.28, ລວມທັງປຶ້ມຄູ່ມືກ່ຽວກັບໂລກບົກພ່ອນໃນດ້ານການຮຽນຮູ້, ຖ້າສົງໄສ ຫຼື ພົບວ່ານັກຮຽນມີໂລກບົກຜ່ອນໃນດ້ານການຮຽນຮູ້.

ໂຮງຮຽນຕ້ອງເຊີນໃຫ້ທ່ານເຂົ້າຮ່ວມການປະຊຸມຄະນະກຳມະການ ARD ໃນແຕ່ລະຄັ້ງສຳລັບລູກຂອງທ່ານ ແລະ ພະຍາຍາມຮັບປະກັນວ່າຜູ້ປົກຄອງໜຶ່ງຄົນ ຫຼື ທັງພໍ່ແມ່ໄດ້ເຂົ້າຮ່ວມ.
ແຈ້ງການທີ່ເປັນລາຍລັກອັກສອນກ່ຽວກັບການປະຊຸມຕ້ອງມອບໃຫ້ແກ່ທ່ານຢ່າງໜ້ອຍຫ້າມື້ຮຽນກ່ອນການປະຊຸມນອກຈາກວ່າທ່ານເຫັນດ້ວຍໃນຊ່ວງເວລາທີ່ສັ້ນກວ່າ. ແຈ້ງການທີ່ເປັນລາຍລັກອັກສອນຕ້ອງປະກອບມີຈຸດປະສົງ, ເວລາ, ສະຖານທີ່ຂອງການປະຊຸມ ແລະ ລາຍຊື່ຜູ້ທີ່ຈະເຂົ້າຮ່ວມການປະຊຸມ. ຖ້າທ່ານບໍ່ສາມາດເວົ້າພາສາອັງກິດ,
ໂຮງຮຽນຕ້ອງສະໜອງແຈ້ງການໃຫ້ແກ່ທ່ານເປັນພາສາໂດຍກຳເນີດຂອງທ່ານນອກຈາກມັນເປັນທີ່ຈັດເຈນທີ່ຈະເຮັດແບບນັ້ນບໍ່ໄດ້.
ຖ້າພາສາໂດຍກຳເນີດຂອງທ່ານບໍ່ແມ່ນພາສາຂຽນ, ໂຮງຮຽນຕ້ອງດຳເນີນການຕາມຂັ້ນຕອນເພື່ອຮັບປະກັນວ່າແຈ້ງການໄດ້ຮັບການແປດ້ວຍປາກ ຫຼື ວິທີການອື່ນໆເພື່ອໃຫ້ທ່ານເຂົ້າໃຈເນື້ອໃນແຈ້ງການດັ່ງກ່າວ.

ການປະຊຸມຄະນະກຳມະການARD ຕ້ອງກົງເວລາ ແລະ ຢູ່ໃນສະຖານທີ່ທີ່ທ່ານ ແລະ ໂຮງຮຽນຕົກລົງກັນ. ຖ້າເວລາ ຫຼື ວັນທີທີ່ໂຮງຮຽນນຳສະເໜີບໍ່ສະດວກຕໍ່ທ່ານ, ໂຮງຮຽນຕ້ອງພະຍາຍາມຢ່າງມີເຫດຜົນເພື່ອຊອກຫາເວລາທີ່ທ່ານສາມາດພົບປະໄດ້.
ຖ້າພໍ່ແມ່ທັງສອງບໍ່ສາມາດເຂົ້າຮ່ວມການປະຊຸມໄດ້, ທ່ານອາດເຂົ້າຮ່ວມຜ່ານຊ່ອງທາງອື່ນໆ ເຊັ່ນ: ຜ່ານທາງໂທລະສັບ ຫຼື ການປະຊຸມທາງວິດີໂອ.
ຖ້າໂຮງຮຽນບໍ່ສາມາດຊັກຊວນໃຫ້ທ່ານເຂົ້າຮ່ວມ, ແລ້ວໂຮງຮຽນກໍສາມາດດຳເນີນການປະຊຸມໂດຍບໍ່ມີທ່ານ.

ສະມາຊິກຄະນະກຳມະການ ARD ອາດຖືກຍົກເວັ້ນຈາກການເຂົ້າຮ່ວມສ່ວນໃດໜຶ່ງ ຫຼື ທັງໝົດຂອງການປະຊຸມຄະນະກຳມະການ ARD ເມື່ອການເຂົ້າຮ່ວມຂອງບຸກຄົນໜຶ່ງບໍ່ຈຳເປັນຍ້ອນຂົງເຂດຫຼັກສູດ ຫຼື ການບໍລິການທີ່ກ່ຽວຂ້ອງຂອງບຸກຄົນດັ່ງກ່າວບໍ່ໄດ້ຮັບການແກ້ໄຂ ຫຼື ສົນທະນາໃນການປະຊຸມ. ທ່ານຕ້ອງເຫັນດ້ວຍເປັນລາຍລັກອັກສອນຕໍ່ການຍົກເວັ້ນນັ້ນ.

ສະມາຊິກຂອງຄະນະກຳມະການ ARD ຍັງສາມາດຖືກຍົກເວັ້ນຈາກການເຂົ້າຮ່ວມການປະຊຸມຄະນະກຳມະການ ARD ເມື່ອການປະຊຸມປະກອບມີການແກ້ໄຂ ຫຼື ການສົນທະນາເຖິງຂົງເຂດຫຼັກສູດ ຫຼື ການບໍລິການທີ່ກ່ຽວຂ້ອງຂອງສະມາຊິກຄົນໃດໜຶ່ງ ຖ້າທ່ານ ແລະ ໂຮງຮຽນຍິນຍອມຕໍ່ການຍົກເວັ້ນເປັນລາຍລັກອັກສອນ ແລະ ບຸກຄົນທີ່ຖືກຍົກເວັ້ນແຈ້ງຂໍ້ມູນເປັນລາຍລັກອັກສອນເຂົ້າໃນການພັດທະນາ IEP ກ່ອນການປະຊຸມ.

## ການມີສິດໄດ້ຮັບ

ມີບົດທົດສອບສອງສ່ວນເພື່ອກຳນົດວ່າລູກຂອງທ່ານມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ຫຼື ບໍ່:
(1) ລູກຂອງທ່ານຕ້ອງມີຄວາມພິການທີ່ມີສິດໄດ້ຮັບພາຍໃຕ້ IDEA; ແລະ (2) ເນື່ອງຈາກຄວາມພິການດັ່ງກ່າວ, ລູກຂອງທ່ານຈຳເປັນຕ້ອງໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການສຶກສາ.
ເພື່ອບັນລຸສ່ວນທຳອິດຂອງບົດທົດສອບສ່ວນທີສອງເພື່ອມີໄດ້ຮັບສິດ, ເດັກນ້ອຍລະຫວ່າງອາຍຸ 3 ປີຫາ 21 ປີ, ນອກຈາກທີ່ໄດ້ລະບຸໄວ້ໃນວົງເລັບຂ້າງລຸ່ມຕ່າງຫາກ, ແມ່ນຕ້ອງບັນລຸບັນທັດຖານສຳລັບປະເພດການພິການໜຶ່ງ ຫຼື ຫຼາຍກວ່ານັ້ນຕາມທີ່ໄດ້ລະບຸໄວ້ຂ້າງລຸ່ມນີ້:

- ໂຣກໂອຕິສຕິກ;
- ຫູໜວກ ຫຼື ລຳບາກໃນການໄດ້ຍິນ (ອາຍຸຕັ້ງແຕ່ເກີດຈົນເຖິງ 21 ປີ);
- ຫູໜວກ-ຕາບອດ (ອາຍຸຕັ້ງແຕ່ເກີດຈົນເຖິງ 21 ປີ);
- ຄວາມພິການດ້ານອາລົມ;
- ຄວາມພິການດ້ານສະຕິປັນຍາ;
- ຄວາມພິການຫຼາຍຢ່າງ;
- ຄວາມພິການອື່ນໆທີ່ບໍ່ໄດ້ຈັດປະເພດໃນໄວເດັກປະຖົມ (ອາຍຸສາມຫາຫ້າປີ)*;
- ການພັດທະນາການຊ້າ (ອາຍຸ 3 ຫາ 9 ປີ)**;
- ຄວາມບົກຜ່ອງດ້ານກະດູກ ແລະ ກ້າມເນື້ອ;
- ຄວາມບົກຜ່ອງດ້ານສຸຂະພາບອື່ນໆ;

- ຄວາມພິການໃນການຮຽນຮູ້ທີ່ສະເພາະ;
- ຄວາມບົກພ່ອງດ້ານຄໍາເວົ້າ ຫຼື ພາສາ;
- ການບາດເຈັບຂັ້ນຮຸນແຮງໃນສະໝອງ; ຫຼື
- ຄວາມບົກພ່ອງດ້ານການເບິ່ງເຫັນ (ອາຍຸຕັ້ງແຕ່ເກີດຈົນເຖິງ 21 ປີ).

*ຄວາມພິການອື່ນໆທີ່ບໍ່ໄດ້ຈັດປະເພດໃນໄວເດັກປະຖົມ ຈະບໍ່ຖືກນໍາມາໃຊ້ອີກຕໍ່ໄປ ນັບຕັ້ງແຕ່ສົກຮຽນ 2025-2026.
**ການມີສິດໄດ້ຮັບພາຍໃຕ້ການພັດທະນາການຊ້າອາດຈະເລີ່ມນໍາໃຊ້ໃນສົກຮຽນ 2024-2025.

ຄະນະກໍາມະການ ARD ຕ້ອງກໍານົດຄວາມເໝາະສົມທີ່ຈະໄດ້ຮັບພາຍໃນ 30 ມື້ໃນປະຕິທິນນັບຕັ້ງແຕ່ມື້ທີ່ສໍາເລັດບົດລາຍງານການປະເມີນຜົນໃນເບື້ອງຕົ້ນ. ຖ້າວັນທີ 30 ຕົກໃນລະຫວ່າງລະດູແລ້ງ ແລະ ໂຮງຮຽນບໍ່ໄດ້ມີຊື່ໂມງຮຽນ, ຄະນະກໍາມະການ ARD ມີເວລາຈົນເຖິງວັນເຂົ້າໂຮງຮຽນທີ 15 ໃນລະດູໃບໄມ້ລົ່ນ ເພື່ອສະຫຼຸບການຕັດສິນທີ່ກ່ຽວຂ້ອງກັບການກໍານົດຄວາມເໝາະສົມທີ່ຈະໄດ້ຮັບໃນເບື້ອງຕົ້ນ, IEP ແລະ ການບັນຈຸ ນອກຈາກການປະເມີນຜົນ ໃນເບື້ອງຕົ້ນລະບຸວ່າເດັກນ້ອຍຈໍາເປັນຕ້ອງໄດ້ຮັບການບໍລິການສົກຮຽນແບບຂະຫຍາຍ (**ESY**) ໃນລະຫວ່າງລະດູຮ້ອນນັ້ນ. ຖ້າມີການລະບຸການບໍລິການ ESY, ຄະນະກໍາມະການ ARD ຕ້ອງໄດ້ປະຊຸມໃຫ້ໄວເທົ່າທີ່ເປັນໄປໄດ້ ຫຼັງຈາກເຮັດບົດລາຍງານການປະເມີນຜົນສໍາເລັດ.

ບໍ່ແມ່ນຜູ້ຮຽນຮູ້ທຸກຄົນທີ່ກໍາລັງດີ້ນຮົນມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ. ຖ້າຫຼັກໆແລ້ວ ລູກຂອງທ່ານປະສົບບັນຫາມາຈາກການຂາດການສິດສອນທີ່ເໝາະສົມໃນວິຊາການອ່ານ ຫຼື ຄະນິດສາດ ຫຼື ເນື່ອງຈາກລູກຂອງທ່ານມີຄວາມຊໍານານທີ່ຈໍາກັດດ້ານພາສາອັງກິດ, ລູກຂອງທ່ານຕ້ອງບໍ່ຖືກພິຈາລະນາໃຫ້ເປັນເດັກພິການພາຍໃຕ້ IDEA. ຖ້າການປະເມີນຜົນສະທ້ອນໃຫ້ເຫັນວ່າລູກຂອງທ່ານບໍ່ໄດ້ມີຄວາມພິການ, ທີມງານສະໜັບສະໜູນທາງວິຊາການ ແລະ ພຶດຕິກໍາ ລະບົບຫຼາຍຊັ້ນທີ່ຕັ້ງຢູ່ໃນວິທະຍາເຂດອາດຈະປະຊຸມກັນ ແລະ ແນະນໍາການບໍລິການ ຫຼື ໂຄງການອື່ນໃນການສຶກສາທົ່ວໄປເພື່ອຊ່ວຍລູກຂອງທ່ານ.

ຖ້າການປະເມີນຜົນສະແດງໃຫ້ເຫັນວ່າລູກຂອງທ່ານມີຄວາມພິການ, ແລ້ວຄະນະກໍາມະການ ARD ຕ້ອງນໍາສະເໜີສ່ວນທີສອງຂອງບົດທົດສອບຄວາມເໝາະສົມສອງສ່ວນ ໂດຍຕັດສິນວ່າລູກຂອງທ່ານຕ້ອງການການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງເພື່ອເຂົ້າຮ່ວມ ແລະ ຄືບໜ້າໃນຫຼັກສູດການສຶກສາທົ່ວໄປ (ເຊັ່ນ: ຫຼັກສູດກ່ຽວກັບສໍາລັບການບໍລິການເດັກນ້ອຍທີ່ບໍ່ໄດ້ພິການ).

## ການສະໜອງການບໍລິການໃນເບື້ອງຕົ້ນ

ຖ້າລູກຂອງທ່ານມີຄຸນສົມບັດສໍາລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງການສຶກສາພິເສດ, ໂຮງຮຽນກໍຈໍາເປັນຕ້ອງສະໜອງ FAPE ໃນສະພາບແວດລ້ອມທີ່ຈໍາກັດໜ້ອຍທີ່ສຸດໃຫ້ແກ່ລູກຂອງທ່ານ. ສິ່ງນີ້ແມ່ນສໍາເລັດຜ່ານການພັດທະນາ IEP ຂອງຄະນະກໍາມະການARD ແລະ ການນໍາໃຊ້ IEP ຂອງໂຮງຮຽນ. ແນວໃດກໍຕາມ ກ່ອນທີ່ໂຮງຮຽນຈະສາມາດສະໜອງການສຶກສາພິເສດໃນເບື້ອງຕົ້ນ ແລະ ການບໍລິການທີ່ກ່ຽວຂ້ອງ, ມັນຕ້ອງໄດ້ຮັບການຍິນຍອມຂອງທ່ານຕໍ່ການບໍລິການ. ໂຮງຮຽນຕ້ອງພະຍາຍາມຢ່າງສົມເຫດສົມຜົນເພື່ອຮັບເອົາການຍິນຍອມຂອງທ່ານຕໍ່ການສະໜອງການບໍລິການໃນເບື້ອງຕົ້ນ. ຖ້າທ່ານບໍ່ຍິນຍອມຕໍ່ການສະໜອງການບໍລິການໃນເບື້ອງຕົ້ນ, ໂຮງຮຽນອາດຂໍໃຫ້ມີການປະນີປະນອມ ຫຼື ຮຽກຮ້ອງໃຫ້ມີຂະບວນການພິຈາລະນາຢ່າງເໝາະສົມເພື່ອຍົກເລີກການປະຕິເສດທີ່ຈະຍິນຍອມຂອງທ່ານຕໍ່ການບໍລິການ. ບໍ່ມີການສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງໃຫ້ທ່ານຖ້າທ່ານປະຕິບັດທີ່ຈະຍິນຍອມ. ໂຮງຮຽນລະເມີດໜ້າທີ່ຂອງຕົນເພື່ອເຮັດໃຫ້ມີ FAPE ສໍາລັບລູກຂອງທ່ານຖ້າທ່ານປະຕິເສດການຍິນຍອມ ຫຼື ລົ້ມເຫຼວທີ່ຈະຕອບໂຕ້ຕໍ່ຄໍາຮ້ອງຂໍໃຫ້ສະໜອງການຍິນຍອມສໍາລັບການສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງໃນເບື້ອງຕົ້ນ.

## ການພັດທະນາໂຄງການສຶກສາສະເພາະບຸກຄົນ (IEP)

ອົງປະກອບຫຼັກຂອງ IEP ປະກອບມີ:

- ລະດັບຄວາມສໍາເລັດດ້ານການສຶກສາຂອງລູກຂອງທ່ານໃນປັດຈຸບັນ ແລະ ຜົນການດໍາເນີນງານຕາມໜ້າທີ່ (**PLAAFP**);
- ເປົ້າໝາຍປະຈໍາປີທີ່ສາມາດວັດແທກໄດ້ ເຊິ່ງລວມເຖິງເປົ້າໝາຍຜົນງານດ້ານການວິຊາການ ແລະ ໜ້າທີ່ການເຮັດວຽກ;
- ຄໍາອະທິບາຍເຖິງການສຶກສາພິເສດ, ການບໍລິການທີ່ກ່ຽວຂ້ອງ ແລະ ຄວາມຊ່ວຍເຫຼືອ ແລະ ການບໍລິການເພີ່ມຕື່ມທີ່ຈະຖືກສະໜອງໃຫ້;
- ຂໍ້ມູນທີ່ກ່ຽວຂ້ອງກັບວິທີທີ່ລູກຂອງທ່ານຈະເຂົ້າຮ່ວມໃນການປະເມີນຂອງລັດ ແລະ ທ້ອງເມືອງ, ເຊິ່ງລວມເຖິງຖະແຫຼງການກ່ຽວກັບການອໍານວຍຄວາມສະດວກທີ່ເໝາະກັບບຸກຄົນ ສໍາລັບລູກຂອງທ່ານທີ່ຈະເຂົ້າຮັບ ການປະເມີນ ແລະ ເພື່ອຕັດສິນວ່າລູກຂອງທ່ານຈໍາເປັນຕ້ອງປະເມີນທາງເລືອກ ຫຼື ບໍ່ ແທນທີ່ຈະດໍາເນີນການປະເມີນທົ່ວລັດແບບປົກກະຕິ ແລະ ເຫດຜົນທີ່ການປະເມີນທາງເລືອກເໝາະກັບລູກຂອງທ່ານ;

- ການບໍລິການການປ່ຽນແປງເມື່ອອາຍຸເໝາະສົມ; ແລະ
- ຂົງເຂດອື່ນໆທີ່ຕ້ອງຖືກພິຈາລະນາ ແລະ ຖ້າຖືກຕັດສິນວ່າຈໍາເປັນຕ້ອງນໍາສະເໜີສໍາລັບເດັກນ້ອຍທີ່ມີຄວາມພິການ, ຄວາມຕ້ອງການ ຫຼື ສະພາບການໃດໜຶ່ງ.

TEA ໄດ້ພັດທະນາແບບຟອມຕົວຢ່າງ IEP ທີ່ສາມາດພົບໄດ້ທີ່ (ລິ້ງເຊື່ອມຕໍ່: bit.ly/3smMLMe).
ໂຮງຮຽນຂອງລູກຂອງທ່ານອາດນໍາໃຊ້ແບບຟອມຕົວຢ່າງນີ້ ຫຼື ອາດໃຊ້ແບບຟອມອື່ນໆ.

ໃນການພັດທະນາ IEP, ມີຫຼາຍສິ່ງທີ່ຄະນະກໍາມະການ ARD ຕ້ອງພິຈາລະນາ ເຊິ່ງປະກອບມີ:

- ຈຸດແຂງຂອງລູກຂອງທ່ານ;
- ຄວາມກັງວົນຂອງທ່ານຕໍ່ການປັບປຸງການສຶກສາຂອງລູກຂອງທ່ານ;
- ຜົນຂອງການປະເມີນຫຼ້າສຸດກ່ຽວກັບລູກຂອງທ່ານ; ແລະ
- ຄວາມຕ້ອງການດ້ານການສຶກສາ, ການພັດທະນາ ແລະ ໜ້າທີ່ຂອງລູກຂອງທ່ານ.

ນອກຈາກນັ້ນ, ຄະນະກໍາມະການ ARD ຕ້ອງນໍາສະເໜີປັດໃຈພິເສດສໍາລັບເດັກນ້ອຍບາງຄົນ ດັ່ງຕໍ່ໄປນີ້:

- ພິຈາລະນາການນໍາໃຊ້ການແຊກແຊງ ແລະ ການສະໜັບສະໜູນພຶດຕິກໍາທີ່ເປັນບວກ ແລະ ຍຸດທະສາດອື່ນໆເພື່ອນໍາສະເໜີເຖິງພຶດຕິກໍານັ້ນທີ່ຂັດຂວາງການຮຽນຮູ້ຂອງເດັກນ້ອຍ ຫຼື ການຮຽນຮູ້ຂອງຄົນອື່ນ;
- ພິຈາລະນາຄວາມຕ້ອງການດ້ານພາສາຂອງເດັກນ້ອຍ ຍ້ອນຄວາມຕ້ອງການເຫຼົ່ານີ້ກ່ຽວຂ້ອງກັບ IEP ຂອງເດັກນ້ອຍເມື່ອເດັກນ້ອຍມີຄຸນສົມບັດໃນນາມເປັນເດັກສອງພາສາຂັ້ນຕົ້ນ; ໃຫ້ການສອນເປັນພາສາໂຕນູນ ແລະ ການນໍາໃຊ້ພາສາໂຕນູນ, ນອກຈາກຄະນະກໍາມະການຈະຕັດສິນວ່າການສອນເປັນພາສາໂຕນູນ ຫຼື ການນໍາໃຊ້ພາສາໂຕນູນບໍ່ເໝາະສົມສໍາລັບເດັກນ້ອຍເມື່ອເດັກນ້ອຍຕາບອດ ຫຼື ມີຄວາມບົກຜ່ອງດ້ານການເບິ່ງເຫັນ;
- ພິຈາລະນາຄວາມຕ້ອງການດ້ານການສື່ສານຂອງເດັກນ້ອຍແຕ່ລະຄົນທີ່ພິການ ແລະ ສໍາລັບເດັກນ້ອຍທີ່ຫູໜວກ ຫຼື ລໍາບາກໃນການໄດ້ຍິນແມ່ນໃຫ້ພິຈາລະນາຄວາມຕ້ອງການດ້ານພາສາ ແລະ ການສື່ສານຂອງເດັກນ້ອຍ, ໂອກາດສໍາລັບການສື່ສານໂດຍກົງກັບເພື່ອນ ແລະ ພະນັກງານມືອາຊີບໃນຮູບແບບພາສາ ແລະ ການສື່ສານຂອງເດັກນ້ອຍ, ລະດັບການສຶກສາ ແລະ ຄວາມຕ້ອງການທີ່ເຕັມຮູບແບບເຊິ່ງລວມເຖິງໂອກາດໃນການສອນໂດຍກົງເປັນພາສາ ແລະ ຮູບແບບການສື່ສານຂອງເດັກນ້ອຍ;
- ພິຈາລະນາວ່າເດັກນ້ອຍແຕ່ລະຄົນທີ່ພິການຕ້ອງການເຄື່ອງມື ແລະ ການບໍລິການເຕັກໂນໂລຊີຊ່ວຍ ຫຼື ບໍ່ ແລະ
- ຕອບສະໜອງອົງປະກອບທີ່ກໍານົດໄວ້ໃນປຶ້ມຄູ່ມືກ່ຽວກັບໂລກບົກຜ່ອງໃນການຮຽນຮູ້ ສໍາລັບນັກຮຽນທີ່ຖືກລະບຸວ່າມີໂລກບົກຜ່ອງໃນການຮຽນຮູ້ ແລະ ຜູ້ທີ່ຕ້ອງການການສຶກສອນສໍາລັບໂລກບົກຜ່ອງໃນການຮຽນຮູ້, ຖ້າມີ.

## ລະດັບຄວາມສໍາເລັດຂອງການສຶກສາໃນປັດຈຸບັນ ແລະ ຜົນການດໍາເນີນງານຕາມໜ້າວຽກ

IEP ຕ້ອງປະກອບມີຄໍາຖະແຫຼງ PLAAFP ຂອງເດັກນ້ອຍ. ຄໍາຖະແຫຼງນີ້ຕ້ອງປະກອບມີວິທີທີ່ຄວາມພິການສົ່ງຜົນກະທົບຕໍ່ການມີສ່ວນຮ່ວມ ແລະ ຄວາມຄືບໜ້າໃນຫຼັກສູດໂດຍລວມ. ຖ້າເດັກນ້ອຍເປັນນັກຮຽນກຸ່ມ, ຄໍາຖະແຫຼງຕ້ອງອະທິບາຍວ່າຄວາມພິການສົ່ງຜົນກະທົບແນວໃດຕໍ່ການເຂົ້າຮ່ວມໃນກິດຈະກໍາທີ່ເໝາະສົມກັບອາຍຸ.

## ເປົ້າໝາຍປະຈໍາປີ

IEP ຕ້ອງປະກອບມີເປົ້າໝາຍປະຈໍາປີທີ່ສາມາດວັດແທກໄດ້ເຊິ່ງລວມເຖິງເປົ້າໝາຍດ້ານການສຶກສາ ແລະ ໜ້າທີ່ ໂດຍຖືກອອກແບບເພື່ອຕອບສະໜອງຄວາມຕ້ອງການຂອງລູກຂອງທ່ານທີ່ເປັນຜົນມາຈາກຄວາມພິການ ເພື່ອວ່າລາວຈະສາມາດມີສ່ວນຮ່ວມ ແລະ ພັດທະນາໃນຫຼັກສູດທົ່ວໄປ. ເປົ້າໝາຍເຫຼົ່ານີ້ຈະຕ້ອງສື່ເຖິງຄວາມຕ້ອງການອື່ນທາງການສຶກສາເຊິ່ງເປັນຜົນມາຈາກຄວາມພິການຂອງລູກທ່ານ. IEP ຕ້ອງອະທິບາຍຄວາມກ້າວໜ້າຂອງລູກທ່ານຕໍ່ເປົ້າໝາຍປະຈໍາປີ ເຊິ່ງຈະຖືກວັດແທກເຊັ່ນດຽວກັນເມື່ອລາຍງານຄວາມກ້າວໜ້າຖືກມອບໃຫ້ແກ່ທ່ານ.

## ການສຶກສາພິເສດ, ການບໍລິການທີ່ກ່ຽວຂ້ອງ ແລະ ການບໍລິການ ແລະ ຄວາມຊ່ວຍເຫຼືອເສີມ

ກຳມະການ ARD ຕັດສິນໃຈວ່າບໍລິການໃດຈຳເປັນຕ້ອງ:

- ເຮັດໃຫ້ເດັກນ້ອຍກ້າວໜ້າຢ່າງເໝາະສົມເພື່ອໃຫ້ບັນລຸເປົ້າໝາຍປະຈຳປີ;
- ມີສ່ວນກ່ຽວຂ້ອງ ແລະ ພັດທະນາໃນຫຼັກສູດທົ່ວໄປລວມທັງການມີສ່ວນຮ່ວມໃນກິດຈະກຳນອກຫຼັກສູດ ແລະ ທີ່ບໍ່ແມ່ນວິຊາຮຽນ; ແລະ
- ໄດ້ຮັບການສຶກສາ ແລະ ມີສ່ວນຮ່ວມກັບເດັກນ້ອຍທີ່ບໍ່ມີຄວາມພິການ.

IEP ຈະຕ້ອງມີການຖະແຫຼງກ່ຽວກັບການສຶກສາພິເສດທີ່ຕ້ອງການ, ການບໍລິການທີ່ກ່ຽວຂ້ອງ ແລະ ການບໍລິການ ແລະ ຄວາມຊ່ວຍເຫຼືອເສີມທີ່ຈະຖືກນຳໃຊ້ກັບລູກຂອງທ່ານ ຫຼື ໃນນາມລູກຂອງທ່ານ. ການບໍລິການເຫຼົ່ານີ້ ຈະຕ້ອງຢູ່ເທິງພື້ນຖານຂອງການຄົ້ນຄວ້າແບບການທົບທວນໂດຍຜູ້ຊ່ຽວຊານໃນລະດັບທີ່ປະຕິບັດໄດ້.

ນອກຈາກນີ້, IEP ຈະຕ້ອງມີການຖະແຫຼງກ່ຽວກັບການປ່ຽນແປງໂປຣແກຣມທີ່ຈຳເປັນ ແລະ ການສະໜັບສະໜູນສຳລັບບຸກຄະລາກອນໃນໂຮງຮຽນທີ່ຈະໄດ້ຮັບ. IEP ຈະຕ້ອງລວມເຖິງວັນທີທີ່ຄາດການໄວ້ສຳລັບການເລີ່ມຕົ້ນຂອງການບໍລິການ ແລະ ການປ່ຽນແປງ ແລະ ຄວາມຖີ່ທີ່ຄາດຫວັງໄວ້ ແລະ ໄລຍະເວລາຂອງການບໍລິການ ແລະ ການປ່ຽນແປງ.

## ການປະເມີນຂອງລັດ

ພາຍໃຕ້ກົດໝາຍລັດຖະບານກາງ, ການປະເມີນຂອງລັດຈະຕ້ອງມອບໃຫ້ແກ່ເດັກນ້ອຍທຸກຄົນ ບໍ່ວ່າໂຮງຮຽນຈະປະສົບຜົນສຳລັດໃນການສອນເດັກນ້ອຍກ່ຽວກັບວິຊາຮຽນຂອງລັດ. ໃນລັດເທັກຊັດ, ມາດຕະຖານເນື້ອຫາດ້ານວິຊາຮຽນເປັນທີ່ຮູ້ຈັກວ່າຄວາມຮູ້ ແລະ ທັກສະທີ່ສຳຄັນຂອງລັດເທັດຊັດ ເຊິ່ງສາມາດພົບໄດ້ໃນເວັບໄຊຂອງ TEA ທີ່ (ລິ້ງເຊື່ອມຕໍ່: bit.ly/3bFeuSk). ເດັກນ້ອຍພິການທີ່ໄດ້ຮັບການບໍລິການດ້ານສຶກສາທີ່ພິເສດຈະຮັບການປະເມີນຂອງລັດຢ່າງເໝາະສົມບໍ່ວ່າຈະເປັນການປະເມີນປົກກະຕິ ຫຼື ການປະເມີນຕ່າງຫາກສຳລັບເດັກນ້ອຍທີ່ພິການດ້ານການຮັບຮູ້ຫຼາຍທີ່ສຸດເຊິ່ງສອດຄ່ອງກັບມາດຕະການຄວາມສຳເລັດດ້ານການສຶກສາທາງເລືອກ. ບໍ່ວ່າລູກຂອງທ່ານຈະຮັບການປະເມີນແບບປົກກະຕິ ຫຼື ການປະເມີນຕ່າງຫາກ, ການປະເມີນຕ້ອງສອດຄ່ອງກັບມາດຕະຖານເນື້ອຫາການສຶກສາທີ່ທ້າທາຍຂອງລັດ ແລະ ລູກຂອງທ່ານຕ້ອງໄດ້ຮັບການອຳນວຍຄວາມສະດວກທີ່ເໝາະສົມກ່ຽວກັບການປະເມີນຂອງລັດ ແລະ ການປະເມີນທົ່ວເມືອງ ຖ້າຈຳເປັນຕາມທີ່ລະບຸໄວ້ໃນ IEP ຂອງລູກທ່ານ.

ຖ້າຄະນະກຳມະການ ARD ພິຈາລະນາວ່າທີ່ພັກຄືສິ່ງສຳຄັນສຳລັບລູກຂອງທ່ານທີ່ຈະເຂົ້າຮ່ວມໃນການປະເມີນ, IEP ຈະຕ້ອງລວມມີການຖະແຫຼງກ່ຽວກັບທີ່ພັກທີ່ເໝາະສົມ. ມີຂໍ້ມູນທີ່ພັກໃຫ້ທີ່ (ລິ້ງເຊື່ອມຕໍ່: bit.ly/3sq2vht).

ຖ້າຄະນະກຳມະການ ARD ພິຈາລະນາວ່າລູກຂອງທ່ານຕ້ອງໄດ້ຮັບການປະເມີນທາງເລືອກແທນການປະເມີນຂອງລັດ ຫຼື ເມືອງສະເພາະ, IEP ຕ້ອງມີຖະແຫຼງກ່ຽວກັບເຫດຜົນທີ່ເດັກບໍ່ສາມາດມີສ່ວນຮ່ວມໃນການປະເມີນແບບປົກກະຕິ ແລະ ເຫດຜົນທີ່ຊີ້ໃຫ້ເຫັນວ່າການປະເມີນທາງເລືອກທີ່ເລືອກເໝາະສຳລັບເດັກ. ແບບຟອມການເຂົ້າຮ່ວມການປະເມີນທາງເລືອກທີ່ TEA ສ້າງຂຶ້ນ ຈະຖືກລວມເຂົ້າເປັນສ່ວນໜຶ່ງຂອງ IEP ຂອງລູກທ່ານໃນກໍລະນີນີ້. ນອກຈາກນັ້ນ, ຖ້າລູກຂອງທ່ານກຳລັງດຳເນີນການປະເມີນຕ່າງຫາກ, IEP ຂອງລູກທ່ານຕ້ອງປະກອບມີເກນມາດຕະຖານ ຫຼື ຈຸດປະສົງໄລຍະສັ້ນ. ເກນມາດຕະຖານ ຫຼື ຈຸດປະສົງໄລຍະສັ້ນແມ່ນພຽງແຕ່ຈຳເປັນສຳລັບນັກຮຽນທີ່ພິການດ້ານການຮັບຮູ້ທີ່ດຳເນີນການປະເມີນຕ່າງຫາກເຊິ່ງສອດຄ່ອງກັບມາດຕະຖານຄວາມສຳເລັດດ້ານການສຶກສາທາງເລືອກ.

## ການເຊື່ອມຕໍ່

IDEA ແລະ ກົດໝາຍຂອງລັດກຳນົດໃຫ້ IEPs ສຳລັບນັກຮຽນຜູ້ໃຫຍ່ໃຫ້ມີບໍລິການການເຊື່ອມຕໍ່. ບໍລິການການເຊື່ອມຕໍ່ຄືຊຸດກິດຈະກຳການປະສານງານທີ່ອອກແບບເພື່ອຊ່ວຍເດັກຍ້າຍຈາກໂຮງຮຽນໄປຍັງກິດຈະກຳຫຼັງເລີກຮຽນ. ເຖິງຢ່າງໃດກໍຕາມ, ອາຍຸທີ່ແຜນການເຊື່ອມຕໍ່ຄວນເລີ່ມແມ່ນແຕກຕ່າງກັນພາຍໃຕ້ກົດໝາຍລັດ ແລະ ລັດຖະບານກາງ. ເພາະສະນັ້ນ, ກົດລະບຽບຂອງຄະນະກຳມະການພາຍໃຕ້ 19 TAC §89.1055 ກຳນົດໃຫ້ຕ້ອງເລີ່ມທັງການບໍລິການປ່ຽນຜ່ານຂອງລັດຖະບານກາງ ແລະ ລັດທີ່ ບໍ່ໃຫ້ກາຍວັນທີ IEP ທຳອິດ ຈະມີຜົນບັງຄັບໃຊ້ ເມື່ອນັກຮຽນມີອາຍຸ 14 ປີ. ດັ່ງນັ້ນ, ບໍ່ໃຫ້ກາຍວັນທີ IEP ທຳອິດຈະມີຜົນບັງຄັບໃຊ້ ເມື່ອນັກຮຽນມີອາຍຸ 14 ປີ, ຄະນະກຳມະການ ARD ຕ້ອງພິຈາລະນາ ແລະ ແກ້ໄຂບັນຫາຕ່າງໆໃນ IEP ຕໍ່ໄປນີ້, ຖ້າເໝາະສົມ:

(1) ການມີສ່ວນຮ່ວມຂອງນັກຮຽນທີ່ເໝາະສົມໃນການເຊື່ອມຕໍ່ຂອງນັກຮຽນຕໍ່ຊີວິດດ້ານນອກລະບົບໂຮງຮຽນຂອງລັດ;
(2) ການມີສ່ວນຮ່ວມທີ່ເໝາະສົມໃນການເຊື່ອມຕໍ່ຂອງນັກຮຽນໂດຍພໍ່ແມ່ຂອງນັກຮຽນ ແລະ ຄົນອື່ນໆທີ່ຮັບເຊີນໃຫ້ເຂົ້າຮ່ວມໂດຍ:
   a. ພໍ່ແມ່ຂອງນັກຮຽນ; ຫຼື
   b. ໂຮງຮຽນຂັ້ນເມືອງທີ່ນັກຮຽນໄດ້ລົງທະບຽນຮຽນ;
(3) ທາງເລືອກການສຶກສາຊັ້ນມັດທະຍົມຕອນປາຍທີ່ເໝາະສົມລວມເຖິງການກະກຽມສຳລັບຫຼັກສູດລະດັບຫຼັງມັດທະຍົມ;
(4) ການປະເມີນຜົນການປະຕິບັດໜ້າວຽກທີ່ເໝາະສົມ;
(5) ສະຖານະການທີ່ເໝາະສົມສຳລັບການອຳນວຍຄວາມສະດວກໃນການແນະນຳນັກຮຽນ ຫຼື ຜູ້ປົກຄອງຂອງນັກຮຽນຕໍ່ໜ່ວຍງານລັດຖະບານສຳລັບການບໍລິການ ຫຼື ຜົນປະໂຫຍດທາງສຸຂະພາບລວມເຖິງການແນະນຳຕໍ່ໜ່ວຍງານລັດຖະບານເພື່ອຈັດວາງນັກຮຽນລົງໄປໃນລາຍການລໍຖ້າສຳລັບຜົນປະໂຫຍດທີ່ອາດໄປທີ່ມີໃຫ້ແກ່ນັກຮຽນ; ແລະ
(6) ການນຳໃຊ້ ແລະ ຄວາມພ້ອມຂອງຄວາມເໝາະສົມ:
   a. ການຊ່ວຍເຫຼືອເພີ່ມຕື່ມ, ການບໍລິການ, ຫຼັກສູດ ແລະ ໂອກາດອື່ນໆເພື່ອຊ່ວຍນັກຮຽນໃນການພັດທະນາທັກສະການຕັດສິນໃຈ; ແລະ
   b. ສະໜັບສະໜູນ ແລະ ບໍລິການເພື່ອສົ່ງເສີມອິດສະລະພາບ ແລະ ການຕັດສິນໃຈດ້ວຍຕົນເອງຂອງນັກຮຽນ, ລວມເຖິງສະໜັບສະໜູນຂໍ້ຕົກລົງການຕັດສິນໃຈ.

ການເລີ່ມຕົ້ນບໍ່ກາຍວັນທີທີ່ IEP ທຳອິດຈະມີຜົນບັງຄັບໃຊ້ເມື່ອເດັກອາຍຸ 14 ປີ ຫຼື ນ້ອຍກວ່າ ຖ້າຄະນະກຳມະການ ARD ພິຈາລະນາວ່າເໝາະສົມ, IEP ຈະຕ້ອງປະກອບມີ:

1. ເປົ້າໝາຍຫຼັງມັດທະຍົມຕອນປາຍທີ່ສາມາດວັດແທກໄດ້ຢ່າງເໝາະສົມ ໂດຍອີງຕາມການປະເມີນການເຊື່ອມຕໍ່ທີ່ເໝາະສົມຕາມອາຍຸເຊິ່ງກ່ຽວຂ້ອງກັບການອົບຮົມ, ການສຶກສາ, ການຈ້າງງານ ແລະ ທັກສະການໃຊ້ຊີວິດອິດສະຫຼະທີ່ເໝາະສົມ ແລະ
2. ການບໍລິການປ່ຽນຜ່ານ, ລວມເຖິງຫຼັກສູດການສຶກສາທີ່ຈຳເປັນເພື່ອຊ່ວຍເດັກໃນການໄປເຖິງເປົ້າໝາຍຫຼັງມັດທະຍົມຕອນປາຍ.

ການເລີ່ມບໍ່ໃຫ້ກາຍວັນທີ່ IEP ທຳອິດຈະມີຜົນບັງຄັບໃຊ້ ເມື່ອນັກຮຽນມີອາຍຸຄົບ 18 ປີ, ຄະນະກຳມະການ ARD ຕ້ອງພິຈາລະນາ ແລະ ແກ້ໄຂບັນຫາຕ່າງໆຕໍ່ໄປນີ້ໃນ IEP ຂອງນັກຮຽນ, ຖ້າເໝາະສົມ:

1. ການມີສ່ວນຮ່ວມໃນການປ່ຽນແປງ ແລະ ອະນາຄົດຂອງນັກຮຽນໂດຍພໍ່ແມ່ຂອງນັກຮຽນ ແລະ ບຸກຄົນອື່ນ, ຖ້າພໍ່ແມ່ ຫຼື ບຸກຄົນອື່ນ:
   a. ຖືກຮັບເຊີນໃຫ້ເຂົ້າຮ່ວມໂດຍນັກຮຽນ ຫຼື ເມືອງຂອງໂຮງຮຽນທີ່ນັກຮຽນໄດ້ລົງທະບຽນຮຽນ; ຫຼື
   b. ໄດ້ຮັບການຍິນຍອມຈາກນັກຮຽນທີ່ຈະເຂົ້າຮ່ວມພາຍໃຕ້ຂໍ້ຕົກລົງໃການຕັດສິນໃຈທີ່ສະໜັບສະໜູນ ແລະ
2. ຄວາມພ້ອມຂອງສະພາບແວດລ້ອມການສິດສອນທີ່ເໝາະສົມຕາມອາຍຸ ລວມເຖິງທີ່ຕັ້ງ ຫຼື ສະພາບແວດລ້ອມຂອງຊຸມຊົນທີ່ຈັດຕຽມນັກຮຽນສຳລັບການສຶກສາ ຫຼື ການອົບຮົມຊັ້ນມັດທະຍົມຕອນປາຍ, ການຈ້າງງານແບບປະສົມປະສານທີ່ແຂ່ງຂັນ ຫຼື ການໃຊ້ຊີວິດຢ່າງອິດສະຫຼະໃນການສື່ສານກັບເປົ້າໝາຍ ແລະ ຈຸດປະສົງການເຊື່ອມຕໍ່ຂອງນັກຮຽນ.

ລູກຂອງທ່ານຄວນເຂົ້າຮ່ວມກອງປະຊຸມຄະນະກຳມະການ ARD ເມື່ອຈະມີການປຶກສາຫາລືກ່ຽວກັບ ການບໍລິການປ່ຽນຜ່ານ ແລະ ເປົ້າໝາຍຫຼັງມັດທະຍົມຕອນປາຍ. ຖ້າລູກຂອງທ່ານບໍ່ໄດ້ເຂົ້າຮ່ວມການປະຊຸມ, ຄະນະກຳມະການ ARD ຕ້ອງດຳເນີນຂັ້ນຕອນຕ່າງໆເພື່ອຮັບປະກັນວ່າ ທາງເລືອກ ແລະ ຜົນປະໂຫຍດຂອງລູກທ່ານໄດ້ຖືກພິຈາລະນາແລ້ວ. ຖ້າລູກຂອງທ່ານອາຍຸຕໍ່າກວ່າ 18 ປີ ແລະ ມີອາຍຸ 14 ປີເປັນຢ່າງຕໍ່າ, ຄະນະກຳມະການ ARD ຍັງຕ້ອງພິຈາລະນາການມີສ່ວນຮ່ວມໃນການເຊື່ອມຕໍ່ຂອງນັກຮຽນໂດຍທ່ານ ແລະ ຄົນອື່ນໆທີ່ຖືກເຊີນໃຫ້ເຂົ້າຮ່ວມໂດຍທ່ານ ແລະ ໂຮງຮຽນ. ນອກຈາກນັ້ນ, ໃນຂອບເຂດທີ່ເໝາະສົມພ້ອມກັບໜັງສືຍິນຍອມຂອງທ່ານ ຫຼື ໜັງສືຍິນຍອມຂອງນັກຮຽນຜູ້ໃຫຍ່, ໂຮງຮຽນຕ້ອງເຊີນຕົວແທນຂອງໜ່ວຍງານທີ່ເຂົ້າຮ່ວມເຊິ່ງອາດຈະຮັບຜິດຊອບສຳລັບການໃຫ້ ຫຼື ຈ່າຍການບໍລິການເຊື່ອມຕໍ່.

## ນັກຮຽນຜູ້ໃຫຍ່

ເມື່ອເດັກອາຍຸຮອດ 18 ປີ, ເດັກຈະກາຍເປັນນັກຮຽນຜູ້ໃຫຍ່.
ນັກຮຽນຜູ້ໃຫຍ່ມີສິດທີ່ຈະຕັດສິນໃຈໃນນາມຂອງຕົນເອງເວັ້ນແຕ່ກົດໝາຍກຳນົດໄວ້ວ່າຂາດຄວາມສາມາດ. ທີ່ການປະຊຸມຄະນະກຳມະການ ARD ເຊິ່ງຈັດຂຶ້ນຢ່າງໜ້ອຍໜຶ່ງປີກ່ອນທີ່ລູກຂອງທ່ານຈະອາຍຸ 18 ປີ, ລູກຂອງທ່ານຈະຮຽນຮູ້ວ່າສິດໃນການຕັດສິນໃຈເລືອກການສຶກສາຈະຖ່າຍທອດຈາກຜູ້ປົກຄອງຂອງພວກເຂົາມາເຖິງພວກເຂົາ. IEP ຂອງລູກທ່ານຕ້ອງລວມມີການຖະແຫຼງເພື່ອຢືນຢັນວ່າຜູ້ປົກຄອງ ແລະ ເດັກໄດ້ຮັບການແຈ້ງກ່ຽວກັບການຖ່າຍທອດສິດ. ມັນຍັງລວມມີການຖະແຫຼງທີ່ອະທິບາຍຂໍ້ມູນ ແລະ ເຄື່ອງມືທີ່ໃຊ້ຮ່ວມກັນກ່ຽວກັບການເປັນຜູ້ປົກຄອງ, ທາງເລືອກໃນການເປັນຜູ້ປົກຄອງ ແລະ ຂໍ້ມູນທີ່ແບ່ງປັນ ກ່ຽວກັບການສະໜັບສະໜູນ ແລະ ການບໍລິການອື່ນທີ່ຖືກອອກແບບມາເພື່ອຊ່ວຍໃນການໃຊ້ຊີວິດອິດສະຫຼະ.

ເມື່ອສິດຂອງທ່ານຖືກຖ່າຍທອດໄປເຖິງນັກຮຽນຜູ້ໃຫຍ່ຂອງທ່ານ, ທັງທ່ານ ແລະ ນັກຮຽນຜູ້ໃຫຍ່ຂອງທ່ານຈະໄດ້ຮັບການແຈ້ງເຕືອນທີ່ກຳນົດໃນອະນາຄົດທັງໝົດ. ເຖິງຢ່າງໃດກໍຕາມ, ການແຈ້ງເຕືອນຂອງການປະຊຸມຄະນະກຳມະການ ARD ບໍ່ແມ່ນການເຊື້ອສຳລັບທ່ານໃຫ້ເຂົ້າຮ່ວມການປະຊຸມ. ທ່ານພຽງແຕ່ສາມາດເຂົ້າຮ່ວມການປະຊຸມໄດ້ ຖ້ານັກຮຽນຜູ້ໃຫຍ່ຂອງທ່ານເຊີນທ່ານ ຫຼື ໃຫ້ອະນຸຍາດໂຮງຮຽນເພື່ອເຊີນທ່ານ.

## ເດັກນ້ອຍທີ່ມີອາການໂອຕິສຕິກ

ຕາມ 19 TAC §89.1055(g), ສຳລັບເດັກນ້ອຍທີ່ມີອາການໂອຕິສຕິກ ມີ 11 ຍຸດທະສາດທີ່ຕ້ອງພິຈາລະນາຢ່າງໜ້ອຍປີລະຄັ້ງ, ເຊິ່ງອີງຕາມແນວທາງການປະຕິບັດສຳລັບໂຄງການສຶກສາທີ່ຜ່ານການກວດສອບຂອງຜູ້ຊ່ຽວຊານຮ່ວມອີງການ ແລະ ອີງຕາມການຄົ້ນຄວ້າໃນລະດັບທີ່ສາມາດປະຕິບັດໄດ້. ເມື່ອຈຳເປັນ, ຍຸດທະສາດເຫຼົ່ານີ້ຕ້ອງຖືກແຈ້ງໃນ IEP. ເມື່ອບໍ່ຈຳເປັນ, IEP ຕ້ອງລວມມີການຖະແຫຼງເຖິງພື້ນຖານທີ່ມີການກຳນົດໄວ້. ຍຸດທະສາດເພີ່ມຕື່ມທີ່ຄະນະກຳມະການ ARD ຕ້ອງພິຈາລະນາແມ່ນ:

- ໂປຣແກຣມການສຶກສາທີ່ຂະຫຍາຍຂຶ້ນ;
- ຕາຕະລາງປະຈຳວັນທີ່ສະທ້ອນໃຫ້ເຫັນເຖິງເວລາທີ່ບໍ່ມີໂຄງສ້າງຂັ້ນຕ່ຳ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າໃນກິດຈະກຳການຮຽນຮູ້;
- ການຝຶກອົບຮົມອີງຕາມຊຸມຊົນ ຫຼື ໃນບ້ານ ຫຼື ທາງເລືອກບ່ອນເຮັດວຽກ;
- ຍຸດທະສາດສົ່ງເສີມພຶດຕິກຳດ້ານບວກ;
- ການວາງແຜນອະນາຄົດ;
- ການຝຶກອົບຮົມ ແລະ ການສະໜັບສະໜູນຜູ້ປົກຄອງ/ຄອບຄົວ;
- ອັດຕາສ່ວນພະນັກງານຕໍ່ເດັກນ້ອຍທີ່ເໝາະສົມເພື່ອກຳນົດກິດຈະກຳ;
- ການແຊກແຊງການສື່ສານ;
- ການສະໜັບສະໜູນ ແລະ ຍຸດທະສາດທັກສະສັງຄົມ;
- ການສະໜັບສະໜູນດ້ານການສຶກສາ/ພະນັກງານມືອາຊີບ; ແລະ
- ຍຸດທະສາດການສອນອີງຕາມການທົບທວນໂດຍຜູ້ຊ່ຽວຊານ, ການປະຕິບັດຕາມການຄົ້ນຄວ້າ.

## ເດັກນ້ອຍທີ່ຫູໜວກ ຫຼື ມີຄວາມລຳບາກຕໍ່ການໄດ້ຍິນ

ສຳລັບເດັກທີ່ຫູໜວກ ຫຼື ມີຄວາມລຳບາກຕໍ່ການໄດ້ຍິນ, ຄະນະກຳມະການ ARD ຕ້ອງພິຈາລະນາກ່ຽວກັບເດັກດັ່ງນີ້:

- ຄວາມຕ້ອງການທາງພາສາ ແລະ ການສື່ສານ;
- ໂອກາດສຳລັບການສື່ສານທາງກົງກັບໝູ່ເພື່ອນ ແລະ ພະນັກງານວິຊາການໃນຮູບແບບພາສາ ແລະ ການສື່ສານຂອງເດັກ;
- ລະດັບການສຶກສາ; ແລະ
- ຄວາມຕ້ອງການທັງໝົດຂອງເດັກ ລວມເຖິງໂອກາດສຳລັບການແນະນຳທາງກົງໃນຮູບແບບພາສາ ແລະ ການສຶກສາຂອງເດັກ.

## ເດັກນ້ອຍທີ່ຕາບອດ ຫຼື ພິການທາງສາຍຕາ

ພາຍໃຕ້ກົດໝາຍຂອງລັດສຳລັບເດັກທີ່ຕາບອດ ຫຼື ພິການທາງສາຍຕາ, ຄະນະກຳມະການ ARD ຕ້ອງລວມຢູ່ພາຍໃນຄຳແນະນຳ IEP ຂອງເດັກໃນຕົວອັກສອນສຳລັບຄົນຕາບອດ ແລະ ການນຳໃຊ້ຕົວອັກສອນສຳລັບຄົນຕາບອດ ຍົກເວັ້ນກຳມະການ ARD ພິຈາລະນາ ແລະ ເອກະສານທີ່ອັກສອນສຳລັບຄົນຕາບອດບໍ່ແມ່ນສື່ການຮຽນຮູ້ທີ່ເໝາະສົມສຳລັບເດັກ. ການພິຈາລະນາຂອງຄະນະກຳມະການ ARD ຕ້ອງອີງຕາມການປະເມີນຂອງສື່ການຮຽນຮູ້ ແລະ ທັກສະການຮູ້ໜັງສືທີ່ເໝາະສົມຂອງເດັກ ແລະ ຄວາມຕ້ອງການຕໍ່ການສິດສອນໃນປັດຈຸບັນ ແລະ ອະນາຄົດ.

ພາຍໃຕ້ກົດໝາຍຂອງລັດ ສຳລັບເດັກທີ່ຕາບອດ ຫຼື ພິການທາງສາຍຕາ, ຄະນະກຳມະການ ARD ຕ້ອງພິຈາລະນາຄວາມຕ້ອງການຂອງເດັກສຳລັບ:

- ທັກສະຊົດເຊີຍເຊັ່ນ ການພັດທະນາຕົວອັກສອນສຳລັບຄົນຕາບອດ ແລະ ແນວຄວາມຄິດ ແລະ ທັກສະອື່ນທີ່ຈຳເປັນເພື່ອເຂົ້າເຖິງຫຼັກສູດທີ່ເຫຼືອ;
- ການປະຖົມນິເທດ ແລະ ການສິດສອນການເຄື່ອນໄຫວ;
- ທັກສະການຕອບໂຕ້ກັບສັງຄົມ;
- ການວາງແຜນອາຊີບ;
- ເຕັກໂນໂລຊີທີ່ອຳນວຍຄວາມສະດວກ ລວມເຖິງອຸປະກອນແທນການແນມເຫັນ;
- ທັກສະການໃຊ້ຊີວິດຢ່າງອິດສະຫຼະ;
- ສັນທະນາການ ແລະ ຄວາມສຸກໃນເວລາຫວ່າງ;
- ການພິຈາລະນາຕົນເອງ; ແລະ
- ປະສິດທິພາບທາງປະສາດສຳຜັດ.

## ແຜນການປັບປຸງ ຫຼື ແຊກແຊງຊ່ວຍເຫຼືອພຶດຕິກຳ (BIP)

ຖ້າຄະນະກຳມະການ ARD ພິຈາລະນາວ່າແຜນການປັບປຸງດ້ານພຶດຕິກຳ ຫຼື ແຜນການແຊກແຊງດ້ານພຶດຕິກຳ (BIP) ເໝາະສົມສຳລັບເດັກ, ແຜນນັ້ນຕ້ອງລວມເປັນສ່ວນໜຶ່ງຂອງ IEP ລູກຂອງທ່ານ ແລະ ມອບໃຫ້ແກ່ອາຈານແຕ່ລະຄົນພ້ອມກັບໜ້າທີ່ຮັບຜິດຊອບສຳລັບການສິດສອນລູກຂອງທ່ານ.

## ການບໍລິການປີການສຶກສາເພີ່ມຕື່ມ (ESY)

ຄະນະກຳມະການ ARD ຕ້ອງພິຈາລະນາວ່າລູກຂອງທ່ານມີຄຸນສົມບັດສຳລັບບໍລິການ ESY ຫຼື ບໍ່ ໃນການທົບທວນແຜນ IEP ປະຈຳປີຂອງລູກທ່ານ. ຄວາມຕ້ອງການການບໍລິການ ESY ຕ້ອງໄດ້ຮັບການບັນທຶກໄວ້ ໂດຍນຳໃຊ້ຂໍ້ມູນທີ່ເກັບກຳໂດຍເຂດການສຶກສາ ແລະ ທ່ານ ໂດຍນຳໃຊ້ການປະເມີນຢ່າງເປັນທາງການ ແລະ ບໍ່ເປັນທາງການ. ລູກຂອງທ່ານຜ່ານເກນບໍລິການ ESY ຖ້າໃນພື້ນທີ່ສຳຄັນໜຶ່ງ ຫຼື ຫຼາຍກວ່ານັ້ນສະແດງໃນເປົ້າໝາຍ ແລະ ຈຸດປະສົງຂອງ IEP ປັດຈຸບັນຂອງລູກທ່ານ ທີ່ເດັກໄດ້ສະແດງໃຫ້ເຫັນຄວາມກ້າວໜ້າມີໄດ້ຮັບມາໃນທີ່ຜ່ານມາ, ລູກຂອງທ່ານໄດ້ສະແດງ ຫຼື ອາດຈະຄາດວ່າໄດ້ສະແດງການຖົດຖອຍຢ່າງຫຼວງຫຼາຍ ແລະ ຮຸນແຮງເຊິ່ງບໍ່ສາມາດເກັບຄືນໄດ້ພາຍໃນໄລຍະເວລາທີ່ເໝາະສົມ. ຄຳວ່າ *ການຖົດຖອຍທີ່ຮຸນແຮງ ຫຼື ຫຼວງຫຼາຍ* ໝາຍຄວາມວ່າເດັກໄດ້ບໍ່ສາມາດ ຫຼື ຈະບໍ່ສາມາດຮັກສາຄວາມກ້າວໜ້າທີ່ໄດ້ຮັບມາໃນທີ່ຜ່ານມາໃນໜຶ່ງ ຫຼື ຫຼາຍຂົງເຂດ IEP ທີ່ສຳຄັນ ໃນເວລາທີ່ບໍ່ມີການບໍລິການ ESY.

ຖ້າຄະນະກຳມະການ ARD ພິຈາລະນາວ່າ ລູກຂອງທ່ານມີຄວາມຕ້ອງການບໍລິການ ESY, IEP ຕ້ອງລະບຸວ່າຂົງເຂດໃດຈະໄດ້ຮັບການແກ້ໄຂໃນລະຫວ່າງການບໍລິການ ESY. ຄະນະກຳມະການ ARD ຈຳເປັນຕ້ອງໄດ້ປຶກສາຫາລືກ່ຽວກັບຄວາມຕ້ອງການການບໍລິການ ESY ໃນກອງປະຊຸມທົບທວນ IEP ປະຈຳປີຂອງເດັກ.

## ການຈັດວາງ

IDEA ກຳນົດວ່າເດັກທີ່ມີຄວາມພິການຕ້ອງໄດ້ຮັບການສຶກສາໃນ *ສະພາບແວດລ້ອມທີ່ມີຂໍ້ຈຳກັດໜ້ອຍທີ່ສຸດ*. ນີ້ໝາຍຄວາມວ່າລູກຂອງທ່ານຕ້ອງໄດ້ຮັບການສຶກສາກັບເດັກນ້ອຍທີ່ບໍ່ມີຄວາມພິການໃນລະດັບຄວາມເໝາະສົມສູງສຸດ. ການນຳລູກຂອງທ່ານອອກຈາກສະພາບແວດລ້ອມການສຶກສາທົ່ວໄປອາດຈະເກີດຂຶ້ນໄດ້ ຖ້າຫາກທຳມະຊາດ ຫຼື ຄວາມຮຸນແຮງໃນຄວາມພິການຂອງເຂົາເຮັດໃຫ້ການສຶກສາໃນຫ້ອງຮຽນສຳລັບການສຶກສາທົ່ວໄປພ້ອມກັບການຊ່ວຍເຫຼືອ ແລະ ບໍລິການພິເສດບໍ່ສາມາດບັນລຸເຖິງຈຸດທີ່ເພິ່ງພໍໃຈໄດ້.

*ການຊ່ວຍເຫຼືອ ແລະ ບໍລິການເສີມ* ໝາຍເຖິງການຊ່ວຍເຫຼືອ, ການບໍລິການ ແລະ ການສະໜັບສະໜູນອື່ນທີ່ມີໃຫ້ໃນຫ້ອງຮຽນສຳລັບການສຶກສາທົ່ວໄປ, ສະພາບແວດລ້ອມທີ່ກ່ຽວຂ້ອງກັບການສຶກສາອື່ນໆ ແລະ ສະພາບແວດລ້ອມນອກຫຼັກສູດ ແລະ ບໍ່ແມ່ນວິຊາຮຽນ, ເພື່ອໃຫ້ເດັກນ້ອຍທີ່ມີຄວາມພິການໄດ້ຮັບການສຶກສາກັບເດັກນ້ອຍທີ່ບໍ່ມີຄວາມພິການໃນລະດັບຄວາມເໝາະສົມສູງສຸດ.

ສ່ວນສຳຄັນຂອງຂະບວນການສຶກສາພິເສດກ່ຽວຂ້ອງກັບການກຳນົດການຈັດວາງການສຶກສາທີ່ເໝາະສົມສຳລັບການດຳເນີນງານ IEP ຂອງເດັກ. ການຈັດວາງ ໝາຍເຖິງຈຸດຕາມທາງເລືອກການຈັດວາງທີ່ຕໍ່ເນື່ອງ (ເຊັ່ນ: ຫ້ອງຮຽນສຳລັບການສຶກສາທົ່ວໄປ, ຫ້ອງຮຽນພິເສດ, ໂຮງຮຽນພິເສດ, ຄຳແນະນຳການສຶກສາຢູ່ບ້ານ, ຄຳແນະນຳໃນໂຮງໝໍ ແລະ ສະຖາບັນ) ທີ່ມີໃຫ້ສຳລັບເດັກທີ່ມີຄວາມພິການ. ການຈັດວາງບໍ່ໄດ້ໝາຍເຖິງຕຳແໜ່ງທີ່ຕັ້ງ ຫຼື ສະຖານທີ່ສະເພາະທີ່ມີການບໍລິການ. ຄະນະກຳມະການ ARD ກຳນົດການຈັດວາງການສຶກສາອີງຕາມ IEP ຂອງເດັກ.

## ການຕັດສິນໃຈຂອງຄະນະກຳມະການ ARD

ການຕັດສິນໃຈຂອງຄະນະກຳມະການ ARD ກ່ຽວກັບອົງປະກອບທີ່ຈຳເປັນຂອງ IEP ຕ້ອງມີການຕົກລົງເຫັນດີເປັນເອກະພາບຈາກສະມາຊິກຂອງຄະນະກຳມະການຖ້າເປັນໄປໄດ້. ການຕົກລົງເຫັນດີເປັນເອກະພາບນີ້ເອີ້ນວ່າ ມະຕິເອກະສັນ. ຄະນະກຳມະການ ARD ຕ້ອງເຮັດວຽກຕາມມະຕິມະຫາຊົນ, ແຕ່ໂຮງຮຽນມີຄວາມຮັບຜິດຊອບສູງສຸດເພື່ອຮັບປະກັນວ່າ IEP ລວມມີການບໍລິການທີ່ລູກຂອງທ່ານຕ້ອງການເພື່ອຮັບ FAPE. ມັນບໍ່ອະນຸຍາດໃຫ້ດຳເນີນການຕັດສິນໃຈຂອງຄະນະກຳມະການ ARD ອີງຕາມສຽງສ່ວນຫຼາຍ. IEP ຕ້ອງລະບຸວ່າທ່ານ ແລະ ຜູ້ບໍລິຫານເຫັນດີ ຫຼື ບໍ່ເຫັນດີກັບການຕັດສິນໃຈຂອງຄະນະກຳມະການ ARD.

ຖ້າທ່ານບໍ່ເຫັນດີກັບການຕັດສິນຂອງຄະນະກຳມະການ ARD, ທ່ານຈະໄດ້ຮັບໂອກາດພຽງຄັ້ງດຽວເພື່ອໃຫ້ຄະນະກຳມະການຢຸດພັກເປັນໄລຍະເວລາໜຶ່ງບໍ່ເກີນ 10 ມື້ລັດຖະການ ຍົກເວັ້ນທ່ານ ແລະ ໂຮງຮຽນຈະຕົກລົງຮ່ວມກັນເປັນເອກະພາບ. ຖ້າທ່ານຍອມຮັບການສະເໜີໃຫ້ພັກຜ່ອນ ແລະ ພິຈາລະນາ, ຄະນະກຳມະການ ARD ຕ້ອງກຳນົດການປະຊຸມພິຈາລະນາໃນເວລາ ແລະ ສະຖານທີ່ທີ່ຕົກລົງກັນ. ເຖິງຢ່າງໃດກໍຕາມ, ຖ້າການທີ່ລູກຂອງທ່ານຢູ່ໃນວິທະຍາເຂດເຮັດໃຫ້ລູກຂອງທ່ານ ຫຼື ຄົນອື່ນຕົກຢູ່ໃນອັນຕະລາຍທາງຮ່າງກາຍ ຫຼື ຖ້າລູກຂອງທ່ານມີຄວາມຜິດທີ່ສາມາດຖືກໄລ່ອອກໄດ້ ຫຼື ຄວາມຜິດທີ່ອາດນຳໄປສູ່ການຈັດວາງໃນໂປຣແກຣມການສຶກສາທາງເລືອກລົງວິໄນ, ຄະນະກຳມະການ ARD ບໍ່ຈຳເປັນປິດປະຊຸມ ຫຼື ປະຊຸມຄືນໃໝ່ ເຖິງແມ່ນວ່າທ່ານຈະບໍ່ເຫັນດ້ວຍກັບການຕັດສິນໃຈຂອງຄະນະກຳມະການ ARD ກໍຕາມ.

ໃນຊ່ວງການຢຸດພັກ, ສະມາຊິກຄະນະກຳມະການ ARD ຕ້ອງພິຈາລະນາທາງເລືອກ, ເກັບກຳຂໍ້ມູນເພີ່ມຕື່ມ, ກະກຽມເອກະສານ ແລະ/ຫຼື ຮັບເອົາຄົນທີ່ມີຄວາມສາມາດເພີ່ມຕື່ມເຊິ່ງເປັນຜູ້ທີ່ສາມາດຊ່ວຍໃນການເຮັດໃຫ້ຄະນະກຳມະການໄປເຖິງຂໍ້ຕົກລົງທີ່ເປັນເອກະພາບກັນ. ຖ້າຄະນະກຳມະການ ARD ປະຊຸມກັນອີກຄັ້ງ ແລະ ທ່ານຍັງສືບຕໍ່ບໍ່ເຫັນດ້ວຍ, ຍົກເວັ້ນການບໍ່ເຫັນດ້ວຍກ່ຽວຂ້ອງກັບຂໍ້ກຳນົດເບື້ອງຕົ້ນຂອງການບໍລິການທີ່ຈຳເປັນຕ້ອງໄດ້ຮັບການຍິນຍອມ, ໂຮງຮຽນຈະຕ້ອງໃຊ້ IEP ທີ່ໂຮງຮຽນຕັດສິນວ່າເໝາະສົມສຳລັບລູກຂອງທ່ານ.

ເມື່ອບໍ່ບັນລຸເຖິງຂໍ້ຕົກລົງເອກະພາບ, ຕ້ອງລວມມີໃບຖະແຫຼງຂອງພື້ນຖານສຳລັບການບໍ່ເຫັນດ້ວຍທີ່ລວມມີໃນ IEP. ຖ້າທ່ານບໍ່ເຫັນດີກັບການຕັດສິນໃຈຂອງຄະນະກຳມະການ ARD, ທ່ານຈະໄດ້ຮັບໂອກາດໃຫ້ຂຽນຄຳຖະແຫຼງຂອງການບໍ່ເຫັນດ້ວຍໂດຍຕົນເອງ. ທາງໂຮງຮຽນຕ້ອງແຈ້ງໃຫ້ທ່ານຮູ້ລ່ວງໜ້າເປັນລາຍລັກອັກສອນຢ່າງໜ້ອຍຫ້າມື້ລັດຖະການກ່ອນການດຳເນີນການຂອງ IEO, ຍົກເວັ້ນທ່ານເຫັນດ້ວຍຕໍ່ໄລຍະເວລາທີ່ສັ້ນລົງ.

ຄະນະກຳມະການ ARD ອາດຈະເລືອກທີ່ຈະຢຸດພັກດ້ວຍເຫດຜົນຫຼາຍກວ່າຄວາມລົ້ມເຫຼວທີ່ຈະບັນລຸຂໍ້ຕົກລົງກ່ຽວ ກັບອົງປະກອບຂອງ IEP ທີ່ຈຳເປັນທັງໝົດ.

## ສຳເນົາຂອງ IEP

ໂຮງຮຽນຕ້ອງມອບສຳເນົາ IEP ຂອງລູກທ່ານໂດຍບໍ່ມີຄ່າໃຊ້ຈ່າຍໃດ. ພາຍໃຕ້ 19 TAC §89.1055(r), ຖ້າທ່ານບໍ່ສາມາດເວົ້າພາສາອັງກິດ ແລະ ພາສາໂດຍກຳເນີດຂອງທ່ານແມ່ນພາສາສະເປນ, ທາງໂຮງຮຽນຈະຕ້ອງໃຫ້ສຳເນົາຂຽນ ຫຼື ການບັນທຶກສຽງ IEP ຂອງລູກທ່ານທີ່ແປເປັນພາສາສະເປນ. ຖ້າທ່ານບໍ່ສາມາດເວົ້າພາສາອັງກິດ ແລະ ພາສາໂດຍກຳເນີດຂອງທ່ານບໍ່ແມ່ນພາສາສະເປນ. ຖ້າທ່ານບໍ່ສາມາດເວົ້າພາສາອັງກິດໄດ້ ແລະ ພາສາແມ່ຂອງທ່ານເປັນພາສາອື່ນທີ່ບໍ່ແມ່ນພາາສສະເປນ, ໂຮງຮຽນຕ້ອງພະຍາຍາມຢ່າງຈິງໃຈເພື່ອສະໜອງສຳເນົາທີ່ເປັນລາຍລັກອັກສອນ ຫຼື ສຽງບັນທຶກຂອງ IEP ຂອງລູກທ່ານທີ່ແປເປັນພາສາແມ່ຂອງທ່ານໃຫ້ແກ່ທ່ານ. ຖ້າທ່ານບໍ່ສາມາດເວົ້າພາສາອັງກິດ ແລະ ພາສາໂດຍກຳເນີດຂອງທ່ານບໍ່ມີພາສາຂຽນ, ທາງໂຮງຮຽນຈະຕ້ອງດຳເນີນການເພື່ອຮັບປະກັນວ່າ IEP ຂອງລູກທ່ານຖືກແປປາກເປົ່າ ຫຼື ໂດຍວິທີອື່ນທີ່ເປັນພາສາໂດຍກຳເນີດຂອງທ່ານ. ການແປແບບຂຽນໝາຍຄວາມວ່າທຸກເນື້ອຫາໃນ IEP ຂອງລູກທ່ານຈະຖືກແປໃນຮູບແບບການຂຽນ. ໂຮງຮຽນສາມາດຈັດໃຫ້ມີການບັນທຶກສຽງຂອງການປະຊຸມຄະນະກຳມະການ ARD ຖ້າທ່ານໄດ້ຮັບການຊ່ວຍເຫຼືອໂດຍນາຍແປພາສາ ຫຼື ການແປຂອງການປະຊຸມ ຕາບໃດທີ່ເນື້ອຫາທັງໝົດໃນ IEP ຂອງລູກທ່ານ ຖືກແປທາງປາກເປົ່າ ແລະ ຖືກບັນທຶກ.

ໂຮງຮຽນຕ້ອງດຳເນີນທີ່ເໝາະສົມທຸກຢ່າງທີ່ຈຳເປັນເພື່ອຮັບປະກັນໃຫ້ພໍ່ແມ່ເຂົ້າໃຈຂະບວນການດຳເນີນການທີ່ການປະຊຸມຄະນະກຳມະການ ARDເຊິ່ງລວມເຖິງການຈັດແຈງນາຍແປພາສາສຳລັບພໍ່ແມ່ທີ່ຫູໜວກ ຫຼື ຫູຕຶງ ຫຼື ຜູ້ທີ່ມີພາສາແມ່ບໍ່ແມ່ນພາສາອັງກິດ.

## ການທົບທວນ IEP

ຄະນະກຳມະການ ARD ຈະຕ້ອງພົບກັນຢ່າງໜ້ອຍປີໜຶ່ງເທື່ອໜຶ່ງເພື່ອທົບທວນ IEP ຂອງລູກທ່ານ ແລະ ພິຈາລະນາວ່າໄດ້ບັນລຸເປົ້າໝາຍປະຈຳແລ້ວບໍ. ຄະນະກຳມະການ ARD ອາດຈະພົບກັນຖີ່ຂຶ້ນກວ່າໜຶ່ງປີເທື່ອໜຶ່ງເພື່ອແກ້ໄຂ IEP ຂອງລູກທ່ານຕາມຄວາມເໝາະສົມເພື່ອຈັດການ:

- ການຂາດຄວາມກ້າວໜ້າທີ່ຄາດຫວັງໄວ້ໄປສູ່ເປົ້າໝາຍປະຈຳປີ ແລະ ໃນຫຼັກສູດທົ່ວໄປ;
- ຜົນຮັບຂອງການປະເມີນຄືນໃໝ່;
- ຂໍ້ມູນກ່ຽວກັບເດັກທີ່ມອບໃຫ້ໂດຍຜູ້ປົກຄອງ;
- ຄວາມຕ້ອງການທີ່ຄາດຫວັງຂອງເດັກ; ຫຼື
- ບັນຫາອື່ນໆ.

ທ່ານສາມາດຂໍຮ້ອງໃຫ້ການປະຊຸມຄະນະກຳມະການ ARD ສົນທະນາເຖິງຄວາມກັງວົນທາງການສຶກສາຂອງລູກທ່ານ. ໂຮງຮຽນຕ້ອງຕອບຄຳຮ້ອງຂໍຂອງທ່ານເປັນລາຍລັກອັກສອນໃຫ້ມີການປະຊຸມ ຫຼື ຂຽນແຈ້ງການໃຫ້ແກ່ທ່ານເຊິ່ງອະທິບາຍເຖິງເຫດຜົນທີ່ທາງໂຮງຮຽນປະຕິເສດທີ່ຈະເອີ້ນປະຊຸມພາຍໃນຫ້າມື້ເຂົ້າຮຽນ. ຖ້າທ່ານບໍ່ສາມາດເວົ້າພາສາອັງກິດ, ໂຮງຮຽນຕ້ອງສະໜອງແຈ້ງການໃຫ້ແກ່ທ່ານເປັນພາສາໂດຍກຳເນີດຂອງທ່ານນອກຈາກມັນເປັນທີ່ຊັດເຈນທີ່ຈະເຮັດແບບນັ້ນບໍ່ໄດ້. ຖ້າພາສາໂດຍກຳເນີດຂອງທ່ານບໍ່ແມ່ນພາສາຂຽນ, ໂຮງຮຽນຕ້ອງດຳເນີນການຕາມຂັ້ນຕອນເພື່ອຮັບປະກັນວ່າແຈ້ງການໄດ້ຮັບການແປດ້ວຍປາກ ຫຼື ວິທີການອື່ນໆເພື່ອໃຫ້ທ່ານເຂົ້າໃຈແຈ້ງການດັ່ງກ່າວ.

ທ່ານ ແລະ ໂຮງຮຽນອາດຈະຕົກລົງເຮັດການປ່ຽນແປງຕໍ່ IEP ໂດຍບໍ່ຕ້ອງຈັດການປະຊຸມຄະນະກຳມະການ ARD. ເຖິງຢ່າງໃດກໍຕາມ, ການປ່ຽນແປງຕໍ່ການພິຈາລະນາຄຸນສົມບັດ, ການປ່ຽນແປງຕໍ່ການຈັດວາງ ແລະ ການກຳນົດການສະແດງຕ້ອງເຮັດໃນການປະຊຸມຄະນະກຳມະການ ARD. ຖ້າປ່ຽນແປງ IEP ຢູ່ນອກການປະຊຸມຄະນະກຳມະການ ARD ຕ້ອງມີເອກະສານທີ່ສະແດງໃຫ້ເຫັນຄວາມເຫັນດີກ່ຽວກັບການປ່ຽນແປງ. ເມື່ອມີການຮ້ອງຂໍ, ທາງໂຮງຮຽນຈະຕ້ອງມອບສຳເນົາ IEP ສະບັບແກ້ໄຂພ້ອມກັບການດັດແກ້ເພີ່ມຕື່ມ. ນອກຈາກນັ້ນ, ທາງໂຮງຮຽນຕ້ອງຮັບປະກັນວ່າມີການແຈ້ງຄະນະກຳມະການ ARD ຂອງເດັກກ່ຽວກັບການປ່ຽນແປງເຫຼົ່ານັ້ນ.

## ການປະເມີນຄືນໃໝ່

ເມື່ອລູກຂອງທ່ານເລີ່ມຮັບການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງ, ຈໍາເປັນຕ້ອງມີການປະເມີນຄືນໃໝ່ເປັນໄລຍະ. ໂຮງຮຽນຈະຕ້ອງໃຊ້ຄວາມພະຍາຍາມຕາມສົມຄວນເພື່ອຮັບຄວາມຍິນຍອມຂອງທ່ານສໍາລັບການປະເມີນຄືນໃໝ່. ຖ້າທ່ານບໍ່ສາມາດຕອບສະໜອງເຖິງແມ່ນວ່າຈະມີຄວາມພະຍາຍາມ, ທາງໂຮງຮຽນອາດຈະເຮັດການປະເມີນຄືນໃໝ່ໂດຍທີ່ບໍ່ໄດ້ຮັບຄວາມຍິນຍອມຈາກທ່ານ. ຖ້າທ່ານປະຕິເສດການຍິນຍອມສໍາລັບການປະເມີນລູກຂອງທ່ານຄືນໃໝ່, ທາງໂຮງຮຽນອາດຈະຂໍການໄກ່ເກ່ຍ ຫຼື ຮ້ອງຂໍຂະບວນການພິຈາລະນາທີ່ຮອດກໍານົດເພື່ອທົດແທນການຂາດການຍິນຍອມສໍາລັບການປະເມີນຄືນໃໝ່. ໂຮງຮຽນບໍ່ໄດ້ລະເມີດໜ້າທີ່ການຄົ້ນພົບເດັກ ຫຼື ພັນທະຕໍ່ການປະເມີນລູກຂອງທ່ານ ຖ້າໂຮງຮຽນບໍ່ໄດ້ພະຍາຍາມທີ່ຈະຍົກເລີກການປະຕິເສດການຍິນຍອມຂອງທ່ານຕໍ່ການປະເມີນຄືນໃໝ່.

ການປະເມີນຄືນໃໝ່ແມ່ນຄ້າຍຄືກັບການປະເມີນຂັ້ນຕົ້ນ. ການປະເມີນຄືນໃໝ່ຕ້ອງຈະຕ້ອງຄອບຄຸມພຽງພໍທີ່ຈະພິຈາລະນາວ່າລູກຂອງທ່ານຄວນສືບຕໍ່ເປັນເດັກທີ່ມີຄວາມພິການ ແລະ ຄວາມຕ້ອງການດ້ານການສຶກສາຂອງລູກທ່ານ. ຖ້າທ່ານ ແລະ ໂຮງຮຽນບໍ່ເຫັນດ້ວຍ, ການປະເມີນລູກຂອງທ່ານຄືນໃໝ່ຄວນປະຕິບັດຢ່າງໜ້ອຍທຸກໆສາມປີ. ຈະບໍ່ມີແມ່ນແຕ່ໜຶ່ງການປະເມີນຄືນໃໝ່ເກີດຂຶ້ນພາຍໃນປີ ຍົກເວັ້ນທ່ານ ແລະ ທາງໂຮງຮຽນເຫັນດີເປັນອີກຢ່າງ.

ການທົບທວນຂໍ້ມູນການປະເມີນທີ່ມີຢູ່ແລ້ວ (**REED**) ຕ້ອງໄດ້ດໍາເນີນໃນນາມເປັນສ່ວນໜຶ່ງຂອງການປະເມີນເບື້ອງຕົ້ນ, ຖ້າເໝາະສົມ ແລະ REED ຕ້ອງຈັດຂຶ້ນໃນນາມເປັນສ່ວນໜຶ່ງຂອງການປະເມີນເດັກຄືນໃໝ່ ພາຍໃຕ້ IDEA. ທາງໂຮງຮຽນບໍ່ຈໍາເປັນຕ້ອງຮັບຄໍາຍິນຍອມຂອງທ່ານເພື່ອທົບທວນຂໍ້ມູນການປະເມີນທີ່ມີຢູ່ແລ້ວ. REED ຈະຕ້ອງດໍາເນີນການໂດຍທີມງານທີ່ມີຫຼາຫຼາຍສາຂາວິຊາ ຖ້າເປັນການປະເມີນເບື້ອງຕົ້ນ ຫຼື ຄະນະກໍາມະການ ARD ຖ້າເປັນການປະເມີນຄືນ, ລວມທັງທ່ານ, ແຕ່ບໍ່ຈໍາເປັນຕ້ອງມີການປະຊຸມ. ສະມາຊິກຈະຕ້ອງທົບທວນຂໍ້ມູນການປະເມີນທີ່ມີຢູ່ແລ້ວກ່ຽວກັບລູກຂອງທ່ານ ລວມທັງຂໍ້ມູນທີ່ທ່ານມອບໃຫ້ເພື່ອພິຈາລະນາຂອບເຂດຂອງການປະເມີນ ຫຼື ການປະເມີນຄືນໃໝ່.

ຖ້າລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງແລ້ວ, ຄະນະກໍາມະການ ARD ຈະຕັດສິນໃຈວ່າຄວນມີການປະເມີນຫຍັງເພີ່ມຕື່ມ, ວ່າມີຄວາມຈໍາເປັນໃດໆທີ່ຕ້ອງພິຈາລະນາວ່າຈະມີການເພີ່ມຕື່ມ ຫຼື ດັດແປງຕໍ່ການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງຂອງລູກທ່ານບໍ່.

ຖ້າຄະນະກໍາມະການຕັດສິນໃຈວ່າບໍ່ຈໍາເປັນຕ້ອງມີການປະເມີນເພີ່ມຕື່ມວ່າລູກຂອງທ່ານຄວນສືບຕໍ່ຕ້ອງການການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ, ເຫດຜົນສາລັບການຕັດສິນໃຈນີ້ຈະຕ້ອງອະທິບາຍໃຫ້ແກ່ທ່ານ. ຫຼັງຈາກທີ່ອະທິບາຍເຫດຜົນວ່າ ເປັນຫຍັງຄະນະກໍາມະການ ARD ຈຶ່ງສະຫຼຸບວ່າຂໍ້ມູນການປະເມີນທີ່ມີຢູ່ພຽງພໍແລ້ວ, ທາງໂຮງຮຽນບໍ່ຈໍາເປັນຕ້ອງດໍາເນີນການປະເມີນໃໝ່ເພື່ອດໍາເນີນການປະເມີນຄືນໃໝ່ໃຫ້ສໍາເລັດ ຍົກເວັ້ນທ່ານຮຽກຮ້ອງໃຫ້ທາງໂຮງຮຽນເຮັດເຊັ່ນນັ້ນ.

## ການປະເມີນການສຶກສາອິດສະຫຼະ (IEE)

ຖ້າທ່ານບໍ່ເຫັນດ້ວຍກັບການປະເມີນ ຫຼື ການປະເມີນຄືນໃໝ່ໂດຍທາງໂຮງຮຽນ, ທ່ານສາມາດຮຽກຮ້ອງ IEE ໂດຍເປັນຄ່າໃຊ້ຈ່າຍໂຮງຮຽນ. ໂຮງຮຽນຈະຕ້ອງໃຫ້ຂໍ້ມູນກັບທ່ານກ່ຽວກັບບ່ອນທີ່ສາມາດຮັບເອົາ IEE ແລະ ຕ້ອງໃຫ້ສໍາເນົາຂອງເກນການຮັບ IEE ຂອງໂຮງຮຽນໃຫ້ແກ່ທ່ານ. IEE ຕ້ອງເປັນໄປຕາມເກນຂອງໂຮງຮຽນ. ຖ້າທ່ານຮ້ອງຂໍ IEE, ທາງໂຮງຮຽນຈະຕ້ອງຈ່າຍເງິນສໍາລັບ IEE ໂດຍບໍ່ຊັກຊ້າ ຫຼື ຮ້ອງຂໍຂະບວນການພິຈາລະນາທີ່ຮອດກໍານົດເພື່ອສະແດງວ່າການປະເມີນນັ້ນເໝາະສົມ. ທ່ານມີສິດໄດ້ຮັບ IEE ພຽງຄັ້ງດຽວທີ່ໂດຍເປັນຄ່າໃຊ້ຈ່າຍສາທາລະນະແຕ່ລະຄັ້ງທີ່ໂຮງຮຽນດໍາເນີນການປະເມີນ. ຖ້າໂຮງຮຽນຮ້ອງຂໍການພິຈາລະນາ ແລະ ເຈົ້າໜ້າທີ່ການພິຈາລະນາຕັດສິນວ່າການປະເມີນຂອງໂຮງຮຽນເຫັນວ່າເໝາະສົມ, ທ່ານຍັງມີສິດຕໍ່ IEE, ແຕ່ບໍ່ແມ່ນຄ່າໃຊ້ຈ່າຍໂຮງຮຽນ. ຂໍ້ມູນທີ່ໄດ້ມາຈາກ IEE ທີ່ເຖິງເກນໂຮງຮຽນຕ້ອງຖືກພິຈາລະນາໂດຍຄະນະກໍາມະການ ARD ດ້ວຍຄວາມເຄົາລົບຕໍ່ບົດບັນຍັດຂອງ FAPE ໂດຍບໍ່ຄໍານຶງວ່າໂຮງຮຽນຈະຈ່າຍສໍາລັບ IEE ຫຼື ບໍ່.

## ການຍົກເລີກຄວາມຍິນຍອມສໍາລັບການບໍລິການ

ເຊັ່ນດຽວກັນກັບທີ່ທ່ານມີອໍານາດທີ່ຈະຍິນຍອມຕໍ່ບົດບັນຍັດເບື້ອງຕົ້ນຂອງການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງ, ທ່ານມີອໍານາດທີ່ຈະຍົກເລີກຄວາມຍິນຍອມຂອງທ່ານສໍາລັບການບໍລິການ. ການຍົກເລີກຄວາມຍິນຍອມຂອງທ່ານຄວນເປັນຮູບແບບການຂຽນ. ເມື່ອໂຮງຮຽນໄດ້ຮັບໜັງສືການຍົກເລີກຂອງທ່ານກໍຄວນເຄົາລົບການຕັດສິນໃຈຂອງທ່ານ. ເຖິງຢ່າງໃດກໍຕາມ, ກ່ອນທີ່ໂຮງຮຽນຈະຢຸດການບໍລິການກໍຕ້ອງມີແຈ້ງການວ່າການບໍລິການຈະຢຸດເຊົາໃຫ້ແກ່ທ່ານກ່ອນໜ້າ. ເຖິງແມ່ນວ່າທາງໂຮງຮຽນຈະຢຸດການບໍລິການ, ທາງໂຮງຮຽນບໍ່ຈໍາເປັນຕ້ອງແກ້ໄຂບັນທຶກການສຶກສາຂອງລູກທ່ານເພື່ອລຶບລ້າງຂໍ້ອ້າງອີງໃດໆຕໍ່ການສຶກສາພິເສດທີ່ຜ່ານມາຂອງລູກທ່ານ ແລະ ບໍລິການທີ່ກ່ຽວຂ້ອງໃນອະດີດ.

ຖ້າທ່ານຍົກເລີກສັນຍາຂອງທ່ານສໍາລັບບົດບັນຍັດຂອງການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງທີ່ຍັງສືບຕໍ່, ລູກຂອງທ່ານຈະຈະບໍ່ມີສິດໄດ້ຮັບການປົກປ້ອງໃດໆພາຍໃຕ້ IDEA. ຍິ່ງໄປກວ່ານັ້ນ, ຖ້າທ່ານຍົກເລີກຄວາມຍິນຍອມຂອງທ່ານສໍາລັບການບໍລິການ, ທາງໂຮງຮຽນອາດຈະບໍ່ຮ້ອງຂໍການໄກ່ເກ່ຍ ຫຼື ຂະບວນການພິຈາລະນາ ເພື່ອພະຍາຍາມປ່ຽນແປງ ຫຼື ທ້າທາຍການຕັດສິນໃຈຂອງທ່ານ.

## ການຈົບການສຶກສາ

ໜຶ່ງໃນຈຸດປະສົງຂອງລະບົບການສຶກສາຂອງລັດໃນເທັກຊັດສ໌ ນັກຮຽນທຸກຄົນຈະຢູ່ໃນໂຮງຮຽນຈົນກວ່າພວກເຂົາຈະໄດ້ຮັບໃບປະກາດຈົບຊັ້ນມັດທະຍົມ. ນັກຮຽນຕ້ອງຜ່ານມາດຕະຖານທີ່ກໍານົດເພື່ອຈົບການສຶກສາດ້ວຍໃບປະກາດຈົບຊັ້ນມັດທະຍົມປົກກະຕິ. ສໍາລັບເດັກທີ່ໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ, ທາງໂຮງຮຽນຕ້ອງປະຕິບັດຕາມຂະບວນການທີ່ກໍານົດເມື່ອກະກຽມການຈົບຊັ້ນຂອງນັກຮຽນ ຫຼື ການໂຈະການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງຍ້ອນນັກຮຽນບໍ່ໄດ້ຜ່ານເກນອາຍຸອີກຕໍ່ໄປ. ນອກຈາກນັ້ນ, ຄະນະກໍາມະການ ARD ມີບົດບາດສໍາຄັນໃນການຕັດສິນໃຈທີ່ກ່ຽວຂ້ອງກັບການຈົບການສຶກສາ.

ພາຍໃຕ້ IDEA, ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງຕ້ອງມີສໍາລັບນັກຮຽນເດັກນ້ອຍ ຫຼື ຜູ້ໃຫຍ່ທີ່ມີສິດຈົນກວ່າເຂົາຮຽນຈົບ ຫຼື ກາຍອາຍຸຕາມທີ່ເກນລະບຸໄວ້ສໍາລັບການສຶກສາສາທາລະນະທີ່ເໝາະສົມ ແລະ ບໍ່ເສຍຄ່າພາຍໃຕ້ກົດໝາຍລັດເຊິ່ງແມ່ນອາຍຸ 21 ປີໃນລັດແທັກຊັດ ຫຼື ຈົນເຖິງອາຍຸ 22 ປີ. ນັກສຶກສາຜູ້ໃຫຍ່ທີ່ໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ຜູ້ທີ່ມີອາຍຸ 21 ປີໃນວັນທີ 1 ກັນຍາຂອງສົກປີຮຽນແມ່ນມີສິດສໍາລັບການບໍລິການຈົນເຖິງຈົບປີການສຶກສານັ້ນ ຫຼື ຈົນຈົບການສຶກສາໂດຍຮັບໄດ້ຮັບລາງວັນໃບປະກາດຈົບຊັ້ນມັດທະຍົມ ຕາມມາດຕະຖານຫຼັກສູດ ແລະ ຂໍ້ກໍານົດດ້ານໜ່ວຍກິດທີ່ມີໃຫ້ສໍາລັບນັກຮຽນໃນການສຶກສາທົ່ວໄປ, ແລ້ວແຕ່ວ່າສິ່ງໃດຈະມາກ່ອນ.

ເມື່ອສິດຂອງນັກຮຽນທີ່ເປັນເດັກນ້ອຍ ຫຼື ຜູ້ໃຫຍ່ຂອງທ່ານສໍາລັບການສຶກສາພິເສດຖືກໂຈະຍ້ອນການຈົບການສຶກສາດ້ວຍໃບປະກາດຈົບຊັ້ນມັດທະຍົມ ຫຼື ຍ້ອນເກີນເກນອາຍຸສໍາລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງການສຶກສາພິເສດ, ທາງໂຮງຮຽນຕ້ອງມີໜັງສືແຈ້ງການກ່ຽວກັບການໂຈະການບໍລິການໃຫ້ແກ່ທ່ານກ່ອນໜ້າ. ນອກຈາກນີ້, ທາງໂຮງຮຽນຕ້ອງໃຫ້ຜົນສະຫຼຸບການຮຽນ ແລະ ຜົນສໍາເລັດດ້ານການຮຽນ ແລະ ການປະຕິບັດແກ່ນັກຮຽນທີ່ເປັນເດັກນ້ອຍ ແລະ ຜູ້ໃຫຍ່ເຊິ່ງຈະລວມເຖິງຂໍ້ແນະນໍາກ່ຽວກັບວິທີການຊ່ວຍນັກຮຽນທີ່ເປັນເດັກນ້ອຍ ແລະ ຜູ້ໃຫຍ່ເພື່ອບັນລຸຕາມເປົ້າໝາຍຫຼັງມັດທະຍົມຂອງນັກຮຽນທີ່ເປັນເດັກນ້ອຍ ແລະ ຜູ້ໃຫຍ່.

ນັກຮຽນທີ່ເປັນເດັກນ້ອຍ ຫຼື ຜູ້ໃຫຍ່ທີ່ໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງອາດຈະຈົບການສຶກສາ ແລະ ໄດ້ຮັບລາງວັນໃບປະກາດຈົບຊັ້ນມັດທະຍົມ ໂດຍການຜ່ານມາດຕະຖານຫຼັກສູດດຽວກັນ ແລະ ຂໍ້ກໍານົດດ້ານໜ່ວຍກິດທີ່ນໍາໃຊ້ຕໍ່ນັກຮຽນໃນການສຶກສາທົ່ວໄປ ພ້ອມທັງການເສັງຜ່ານການປະເມີນຂອງລັດທີ່ກໍານົດໄວ້ (ເຊິ່ງສາມາດລວມທັງສະຖານະການທີ່ນັກຮຽນໄດ້ພະຍາຍາມແລ້ວ ແຕ່ບໍ່ສາມາດບັນລຸໄດ້ຕາມຜົນງານທີ່ໜ້າເພິ່ງພໍໃຈບໍ່ເກີນການປະເມີນຂອງລັດທີ່ກໍານົດໄວ້ຈໍານວນສອງລາຍການ).

ນັກຮຽນທີ່ກໍາລັງຈົບການສຶກສາທຸກຄົນທີ່ມີສິດສໍາລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ແຕ່ການມີສິດໄດ້ຮັບຂອງນັກສຶກສາຖືກຍົກເລີກ ຍ້ອນການໄດ້ຮັບປະກາສະນິຍະບັດມັດທະຍົມປາຍຕ້ອງໄດ້ຮັບຜົນສະຫຼຸບຜົນງານການຮຽນ ແລະ ການປະຕິບັດ. ບົດສະຫຼຸບນີ້ຄວນພິຈາລະນາຕາມສົມຄວນຈາກມຸມມອງຂອງຜູ້ປົກຄອງ ແລະ ນັກຮຽນ ແລະ ໜັງສືແນະນໍາຈາກໜ່ວຍບໍລິການຜູ້ໃຫຍ່ກ່ຽວກັບວິທີຊ່ວຍນັກຮຽນໃນການປະຊຸມເປົ້າໝາຍ ມັດທະຍົມຕອນປາຍ. ສໍາລັບນັກຮຽນບາງຄົນ, ຜົນສະຫຼຸບຕ້ອງລວມມີການປະເມີນຂອງນັກຮຽນ.

ເດັກ ຫຼື ນັກຮຽນຜູ້ໃຫຍ່ທີ່ບັນລຸໄດ້ຕາມຂໍ້ກຳນົດສຳລັບການຮຽນຈົບ ຕາມ 19 TAC 89.1070(b)(2) ຫຼື (b)(3)(A), (B) ຫຼື (C) ແລະ ມີອາຍຸຕ່ຳກວ່າ 22 ປີ ຍັງມີສິດໄດ້ຮັບການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າພາຍໃຕ້ IDEA. ພາຍໃຕ້ສະຖານະການບາງຢ່າງເດັກນ້ອຍອາດກັບໄປໂຮງຮຽນ ແລະ ຮັບບໍລິການຕະຫຼອດໝົດສົກປີຮຽນໃນປີທີ່ເຂົາເຂົ້າສູ່ອາຍຸ 22 ປີ.
ຖ້າລູກຂອງທ່ານຫາທົບທາງທີ່ຈະກັບຄືນມາຫຼັງຈາກໄດ້ບັນລຸໄດ້ຕາມຄວາມຕ້ອງການສຳລັບການຮຽນຈົບ ແລະ ໄດ້ຮັບລາງວັນຊັ້ນສູງ, ຄະນະກຳມະການ ARD ຕ້ອງກຳນົດການບໍລິການດ້ານການສຶກສາທີ່ຈຳເປັນ.

## ການລົງວິໄນ

ມີກົດພິເສດທີ່ນຳໃຊ້ກັບການລົງວິໄນຕໍ່ເດັກທີ່ມີຄວາມພິການຫຼາຍກວ່າລົງວິໄນຕໍ່ເດັກທີ່ບໍ່ມີຄວາມສາມາດ. ໂດຍທົ່ວໄປ, ເດັກທີ່ມີຄວາມພິການບໍ່ສາມາດລົບອອກຈາກສະຖານະການສຶກສາປັດຈຸບັນຂອງເຂົາຕິດຕໍ່ກັນເປັນເວລາຫຼາຍກ ວ່າ 10 ມື້ເຂົ້າຮຽນຖ້າການປະພຶດຜິດນັ້ນກ່ຽວຂ້ອງກັບຄວາມພິການຂອງເຂົາ. ນອກຈາກນີ້ແລ້ວ, ສະຖານະການທາງວິໄນເກີດຂຶ້ນກັບນັກຮຽນທີ່ມີຄວາມພິການກະຕຸ້ນໃຫ້ມີການກຳນົດການປະຊຸມຄະນະກຳມະການ ARD.

## ການຍ້າຍອອກໄລຍະສັ້ນ

ເຈົ້າໜ້າທີ່ຂອງໂຮງຮຽນອາດຈະຍ້າຍລູກຂອງທ່ານອອກຈາກສະຖານະການສຶກສາປັດຈຸບັນຂອງເຂົາຖ້າລູກຂອງທ່ານລະເມີດຈັນຍາບັນຂອງນັກຮຽນ. ການຍ້າຍອອກນີ້ອາດຈະເປັນສະພາບແວດລ້ອມການສຶກສາທາງເລືອກຊົ່ວຄາວທີ່ເໝາະສົມ (IAES), ສະພາບແວດລ້ອມອື່ນ ຫຼື ການລົງວິໄນຕິດຕໍ່ກັນບໍ່ເກີນ 10 ມື້ເຂົ້າຮຽນເທົ່າທີ່ມາດຕະການທາງວິໄນນຳໃຊ້ແກ່ເດັກນ້ອຍທີ່ບໍ່ມີຄວາມພິການ ແລະ ສຳລັບການຍ້າຍອອກເພີ່ມຕື່ມທີ່ບໍ່ເກີນ 10 ມື້ເຂົ້າຮຽນຕິດຕໍ່ກັນໃນສົກປີຮຽນດຽວກັນນັ້ນ, ເພື່ອແຍກເຫດການການປະພຶດຜິດຕາບໃດທີ່ການຍ້າຍບໍ່ໄດ້ຖືເປັນການປ່ຽນແປງໃນການຈັດວາງ. ສິ່ງນີ້ມັກເອີ້ນວ່າ ກົດ 10 ມື້.

ການລົງໂທດທາງວິໄນເປັນເວລາ 10 ມື້ເຂົ້າຮຽນຕິດຕໍ່ກັນ ຫຼື ໜ້ອຍກວ່ານັ້ນບໍ່ໄດ້ກະຕຸ້ນຄວາມຈຳເປັນທີ່ຈະເອີ້ນປະຊຸມຄະນະກຳມະການ ARD ນອກຈາກການໄລ່ອອກຈະປະກອບເປັນການປ່ຽນແປງໃນການຈັດວາງ. ເຂດການສຶກສາບໍ່ສະໜອງການບໍລິການໃຫ້ເດັກນ້ອຍພິການ ຫຼື ເດັກນ້ອຍທີ່ບໍ່ໄດ້ພິການແຕ່ຖືກໄລ່ອອກຈາກການຈັດວາງໃນປັດຈຸບັນຂອງເຂົາເປັນ 10 ມື້ຮຽນ ຫຼື ຕ່ຳກວ່ານັ້ນໃນສົກປີນັ້ນ.

## ຍອດລວມການຍ້າຍອອກທັງໝົດ 10 ມື້ ຫຼື ຫຼາຍກວ່ານັ້ນ

ເຈົ້າໜ້າທີ່ຂອງໂຮງຮຽນສາມາດສັ່ງໃຫ້ມີການຍ້າຍໄລຍະສັ້ນເພີ່ມຕື່ມໃນສົກຮຽນປີດຽວກັນ ເພື່ອແຍກເຫດການການປະພຶດຜິດ, ເຊິ່ງການຍ້າຍເຫຼົ່ານີ້ບໍ່ໄດ້ຖືເປັນການປ່ຽນແປງໃນການຈັດວາງ. ຫຼັງຈາກທີ່ລູກຂອງທ່ານຖືກຍ້າຍອອກເປັນເວລາ 10 ມື້ເຂົ້າຮຽນຕິດຕໍ່ກັນໃນສົກຮຽນປີດຽວກັນ, ຖ້າການຍ້າຍບໍ່ແມ່ນສຳລັບ 10 ມື້ເຂົ້າຮຽນຕິດຕໍ່ກັນ ແລະ ບໍ່ແມ່ນການປ່ຽນການຈັດວາງ, ທາງໂຮງຮຽນຕ້ອງຈັດໃຫ້ມີການບໍລິການເພື່ອໃຫ້ລູກຂອງທ່ານສືບຕໍ່ມີສ່ວນຮ່ວມໃນຫຼັກສູດການສຶກສາທົ່ວໄປເຖິງແມ່ນວ່າຢູ່ໃນອີກສະພາບແວດລ້ອມໜຶ່ງ ແລະ ເພື່ອພັດທະນາສູ່ເປົ້າໝາຍທີ່ວາງໄວ້ໃນ IEP ຂອງລູກທ່ານ.
ພະນັກງານໂຮງຮຽນຕ້ອງປຶກສາຫາລືກັບອາຈານຂອງນັກຮຽນຢ່າງໜ້ອຍໜຶ່ງຄົນເພື່ອຕັດສິນໃຈວ່າການບໍລິການໃດເປັນສິ່ງຈຳເປັນ. ຂໍໃຫ້ຊາບວ່າ IDEA ກຳນົດໄວ້ໃນ 34 CFR §300.530(d)(5) ຄະນະກຳມະການ ARD ກຳນົດການບໍລິການທີ່ເໝາະສົມຖ້າການໄລ່ອອກແມ່ນການປ່ຽນແປງໃນການຈັດວາງ.

## ການຈັດການປ່ຽນແປງການຈັດວາງ

ການຍ້າຍເດັກທີ່ມີຄວາມພິການຈາກສະຖານະການສຶກສາປັດຈຸບັນຂອງເຂົາຄື *ການປ່ຽນແປງການຈັດວາງ* ຖ້າການຍ້າຍແມ່ນຫຼາຍກວ່າ 10 ມື້ເຂົ້າຮຽນຕິດຕໍ່ກັນ ຫຼື ເດັກມີການຍ້າຍເປັນຊຸດທີ່ຖືວ່າເປັນຮູບແບບ. ຮູບແບບຂອງການຍ້າຍເກີດຂຶ້ນເມື່ອ:

- ລວມການຍ້າຍທັງໝົດເຫຼົ່ານີ້ຫຼາຍກວ່າ 10 ມື້ເຂົ້າຮຽນໃນສົກປີຮຽນ;
- ການປະພຶດຂອງເດັກມີຄວາມຄ້າຍຄືກັບການປະພຶດຂອງເດັກໃນເຫດການໃນອະດີດຢ່າງໃຫຍ່ຫຼວງທີ່ວ່າສິ່ງພົນເຖິງການຍ້າຍເປັນຊຸດ; ແລະ

- ປັດໄຈອື່ນເຊັ່ນຄວາມຍາວຂອງການຍ້າຍ, ຈຳນວນເວລາທັງໝົດທີ່ເດັກນ້ອຍຖືກຍ້າຍ ແລະ ຄວາມໃກ້ຄຽງຂອງການຍ້າຍຕໍ່ແຕ່ລະອັນ.

ທາງໂຮງຮຽນຈະພິຈາລະນາອີງຕາມພື້ນຖານຂອງແຕ່ລະກໍລະນີວ່າ ຮູບແບບຂອງຈຳນວນການຍ້າຍເພື່ອປ່ຽນແປງການຈັດວາງ. ທ່ານອາດຈະທ້າທາຍການຕັດສິນຂອງໂຮງຮຽນກ່ຽວກັບວ່າແບບແຜນການໄລ່ອອກເກີດຂຶ້ນຜ່ານຂະບວນການພິຈາລະນາທີ່ຖືກຕ້ອງ ແລະ ການພິຈາລະນາຄະດີຕາມຂະບວນການຍຸຕິທຳ ຫຼື ບໍ່.

ຖ້າທາງໂຮງຮຽນສະເໜີການຍ້າຍທີ່ຖືເປັນການປ່ຽນແປງການຈັດວາງ, ເຈົ້າໜ້າທີ່ໂຮງຮຽນຕ້ອງແຈ້ງທ່ານກ່ຽວກັບການຕັດສິນນັ້ນ ແລະ ໃຫ້ສຳເນົາ *ແຈ້ງການກ່ຽວກັບມາດຕະການປ້ອງກັນຕາມຂັ້ນຕອນ* ແກ່ທ່ານ (ລິ້ງເຊື່ອມຕໍ່: fw.escapps.net). ສິ່ງນີ້ຕ້ອງສຳເລັດໃນມື້ທີ່ມີການຕັດສິນເພື່ອປ່ຽນແປງການຈັດວາງຂອງເດັກ. ນອກຈາກນີ້, ທາງໂຮງຮຽນຕ້ອງເອີ້ນປະຊຸມຄະນະກຳມະການ ARD ເພື່ອດຳເນີນການສິ່ງທີ່ເອີ້ນວ່າ ການພິຈາລະນາອາການສະແດງ. ການປະຊຸມເພື່ອພິຈາລະນາອາການສະແດງຕ້ອງເກີດຂຶ້ນພາຍໃນເວລາ 10 ມື້ ຮຽນ ຫຼັງຈາກວັນທີທີ່ເກີດມີການຕັດສິນໃຈໃຫ້ປ່ຽນແປງການຈັດວາງຂອງເດັກນ້ອຍ.

## ການພິຈາລະການສະແດງ

ເມື່ອດຳເນີນການພິຈາລະນາການສະແດງ, ຄະນະກຳມະການ ARD ຕ້ອງທົບທວນຂໍ້ມູນທີ່ກ່ຽວຂ້ອງທັງໝົດໃນໄຟລ໌ຂອງລູກທ່ານລວມເຖິງ IEP, ຂໍ້ສັງເກດຂອງຄູ ແລະ ຂໍ້ມູນທີ່ກ່ຽວຂ້ອງໃດໆທີ່ມອບໃຫ້ແກ່ທ່ານເພື່ອພິຈາລະນາ:

- ຖ້າຄວາມປະພຶດໃນຄຳຖາມເກີດຈາກ ຫຼື ມີຄວາມສຳພັນໂດຍກົງ ແລະ ສຳຄັນຕໍ່ຄວາມພິການຂອງລູກທ່ານ; ຫຼື
- ຖ້າຄວາມປະພຶດໃນຄຳຖາມເປັນຜົນໂດຍກົງຂອງຄວາມລົ້ມເຫຼວຂອງໂຮງຮຽນເພື່ອດຳເນີນ IEP.

ຖ້າຄະນະກຳມະການ ARD ພິຈາລະນາວ່າເງື່ອນໄຂຂໍ້ໃດຂໍ້ໜຶ່ງເປັນໄປຕາມນັ້ນແລ້ວການປະພຶດຄືການສະແດງອອກຂອງຄວາມພິການຂອງເດັກ. ຖ້າຄະນະກຳມະການ ARD ພິຈາລະນາວ່າເງື່ອນໄຂຂໍ້ໃດຂໍ້ໜຶ່ງບໍ່ເປັນໄປຕາມນັ້ນແລ້ວການປະພຶດກໍບໍ່ແມ່ນການສະແດງອອກຂອງຄວາມພິການຂອງເດັກ.

## ເມື່ອການປະພຶດແມ່ນການສະແດງອອກ

ຖ້າການປະພຶດແມ່ນການສະແດງອອກຂອງຄວາມພິການຂອງລູກທ່ານ, ຄະນະກຳມະການ ARD ຕ້ອງ:

- ດຳເນີນການປະເມີນພຶດຕິກຳການປະຕິບັດ (FBA), ຍົກເວັ້ນທາງໂຮງຮຽນຈະດຳເນີນການ FBA ກ່ອນການປະພຶດທີ່ສົ່ງຜົນໃຫ້ເກີດການປ່ຽນແປງຂອງການຈັດວາງເກີດຂຶ້ນ ແລະ ນຳ BIP ໄປໃຊ້; ຫຼື
- ຖ້າມີ BIP ຢູ່ແລ້ວ, ໃຫ້ກວດສອບ BIP ແລະ ປັບປ່ຽນມັນຕາມຄວາມຈຳເປັນເພື່ອຈັດການພຶດຕິກຳ.

ນອກຈາກນັ້ນ, ຄະນະກຳມະການ ARD ຕ້ອງສົ່ງລູກຂອງທ່ານກັບຄືນຈາກບ່ອນທີ່ລູກຂອງທ່ານຖືກຍ້າຍອອກ ຍົກເວັ້ນ:

- ທ່ານ ແລະ ໂຮງຮຽນເຫັນດີທີ່ຈະປ່ຽນແປງການຈັດວາງເພື່ອເປັນສ່ວນໜຶ່ງຂອງການແກ້ໄຂ BIP ລູກຂອງທ່ານ; ຫຼື
- ການທີ່ລູກຂອງທ່ານລະເມີດຕໍ່ຈັນຍາບັນຂອງນັກຮຽນມີສ່ວນກ່ຽວຂ້ອງກັບໜຶ່ງໃນສະຖານະການພິເສດທີ່ອະທິບາຍດ້ານລຸ່ມ.

ຖ້າຄະນະກຳມະການ ARD ສະຫຼຸບວ່າ ພຶດຕິກຳຂອງລູກທ່ານເກີດຈາກຄວາມລົ້ມເຫຼວຂອງໂຮງຮຽນຕໍ່ການປະຕິບັດຕາມ IEP, ທາງໂຮງຮຽນຕ້ອງດຳເນີນການທັນທີເພື່ອແກ້ໄຂຂໍ້ບົກຜ່ອງ.

## ເມື່ອການປະພຶດບໍ່ແມ່ນການສະແດງອອກ

ຖ້າການປະພຶດບໍ່ແມ່ນການສະແດງອອກຂອງຄວາມພິການຂອງລູກທ່ານ, ພະນັກງານໂຮງຮຽນສາມາດລົງວິໄນກັບລູກຂອງທ່ານດ້ວຍວິທີດຽວກັນກັບເດັກນ້ອຍຄົນອື່ນ, ຍົກເວັ້ນການບໍລິການການສຶກສາທີ່ເໝາະສົມຕ້ອງດຳເນີນຕໍ່ໄປ. ຄະນະກຳມະການ ARD ຂອງເດັກຈະພິຈາລະນາ IAES ເຊິ່ງເດັກຈະໄດ້ຮັບ.

## ສະຖານະການພິເສດ

ພະນັກງານໂຮງຮຽນອາດຈະຍ້າຍລູກຂອງທ່ານໄປ IAES ເປັນເວລາສູງເຖິງ 45 ມື້ເຂົ້າຮຽນ
ໂດຍບໍ່ຄຳນຶງວ່າພຶດຕິກຳດັ່ງກ່າວເປັນການສະແດງອອກເຖິງຄວາມພິການຂອງເຂົາໃນກໍລະນີທີ່ລູກຂອງທ່ານ:

- ພົກພາ ຫຼື ຄອບຄອງອາວຸດທີ່ໂຮງຮຽນ, ໃນບໍລິເວນໂຮງຮຽນ ຫຼື ໃນຊ່ວງໂມງຮຽນ;
- ເຈດຕະນາຄອບຄອງ ຫຼືນຳໃຊ້ສິ່ງເສບຕິດທີ່ຜິດກົດໝາຍ ຫຼື ຂາຍ ຫຼື ຊັກຊວນໃຫ້ຂາຍສານຄວບຄຸມໃນຂະນະທີ່ຢູ່ໂຮງຮຽນ, ໃນບໍລິເວນໂຮງຮຽນ ຫຼື ໃນຊ່ວງໂມງຮຽນ; ຫຼື
- ເຮັດໃຫ້ຄົນອື່ນໄດ້ຮັບບາດເຈັບສາຫັດທາງຮ່າງກາຍໃນຂະນະທີ່ຢູ່ໂຮງຮຽນ, ໃນບໍລິເວນໂຮງຮຽນ ຫຼື ໃນຊ່ວງໂມງຮຽນ.

ຄະນະກຳມະການ ARD ຈະພິຈາລະນາ IAES ເຊິ່ງເດັກຈະໄດ້ຮັບ.

## ການຄຸ້ມຄອງສຳລັບເດັກນ້ອຍທີ່ຍັງຖືວ່າບໍ່ຜ່ານເກນສຳລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ.

ຖ້າລູກຂອງທ່ານຍັງບໍ່ໄດ້ຮັບການພິຈາລະນາວ່າຜ່ານເກນສຳລັບການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງ
ແຕ່ມີສ່ວນຮ່ວມໃນການປະພຶດທີ່ລະເມີດຈັນຍາບັນຂອງນັກຮຽນ, ລູກຂອງທ່ານມີສິດໄດ້ຮັບການຄຸ້ມຄອງຕາມຂັ້ນຕອນໃນ IDEA
ຖ້າໂຮງຮຽນຮູ້ວ່າລູກຂອງທ່ານເປັນເດັກທີ່ມີຄວາມພິການກ່ອນທີ່ພຶດຕິກຳຈະເກີດຂຶ້ນ. ຂໍ້ມູນເພີ່ມຕື່ມກ່ຽວກັບຫົວຂໍ້ນີ້ ສາມາດຫາໄດ້ໃນ
*ແຈ້ງການກ່ຽວກັບມາດຕະການປ້ອງກັນຕາມຂັ້ນຕອນ* (ລິ້ງເຊື່ອມຕໍ່: fw.escapps.net).

## ການເລັ່ງຂະບວນການພິຈາລະນາຄະດີ

ຖ້າທ່ານບໍ່ເຫັນດ້ວຍກັບການຕັດສິນກ່ຽວກັບການຈັດວາງໃນ IAES ຫຼື ການພິຈາລະນາການສະແດງອອກ,
ທ່ານສາມາດຮ້ອງຂໍຂະບວນການພິຈາລະນາແບບເລັ່ງດ່ວນ.
ຖ້າທາງໂຮງຮຽນຕ້ອງການທີ່ຈະທ້າທາຍຂອງການທີ່ລູກຂອງທ່ານຈະກັບຄືນໄປໂຮງຮຽນຫຼັງຈາກຄະນະ ກຳມະການ ARD
ໄດ້ພິຈາລະນາວ່າການປະພຶດຂອງເຂົາເປັນການສະແດງອອກຂອງຄວາມພິການ.

## ການແກ້ໄຂຂໍ້ຂັດແຍ່ງ

ບາງຄັ້ງ, ຂໍ້ຜິດພາດກໍເກີດຂຶ້ນກ່ຽວຂ້ອງກັບການລະບຸ, ການປະເມີນ, ການຈັດວາງການສຶກສາ ຫຼື ບົດບັນຍັດຂອງ FAPE ຕໍ່ລູກຂອງທ່ານທີ່ມີຄວາມພິການ.
ຖ້າມີຂໍ້ຂັດແຍ່ງເກີດຂຶ້ນ, ທ່ານໄດ້ຮັບການສະໜັບສະໜູນເປັນຢ່າງສູງໃຫ້ເຮັດວຽກກັບພະນັກງານໂຮງຮຽນເພື່ອແກ້ໄຂຄວາມແຕກຕ່າງທີ່ເກີດຂຶ້ນ.
ທ່ານສາມາດຖາມໂຮງຮຽນກ່ຽວກັບເງື່ອນໄຂການແກ້ໄຂຂໍ້ຂັດແຍ່ງທີ່ມີໃຫ້ແກ່ຜູ້ປົກຄອງໄດ້. TEA
ມີສີ່ຕົວເລືອກສຳລັບການແກ້ໄຂຂໍ້ຂັດແຍ່ງການສຶກສາພິເສດ: ການອຳນວຍຄວາມສະດວກ IEP ຂອງລັດ, ບໍລິການ ການໄກ່ເກ່ຍ,
ຂະບວນການແກ້ໄຂການຕໍ່ວ່າການສຶກສາພິເສດ ແລະ ໂປຣແກຣມຂະບວນການພິຈາລະນາ.

ຂໍ້ມູນກ່ຽວກັບຕົວເລືອກການແກ້ໄຂຂໍ້ຂັດແຍ່ງ ສາມາດຫາໄດ້ໃນ *ແຈ້ງການກ່ຽວກັບມາດຕະການປ້ອງກັນຕາມຂັ້ນຕອນ* (ລິ້ງເຊື່ອມຕໍ່: fw.escapps.net).
ຂໍ້ມູນເພີ່ມຕື່ມກ່ຽວກັບການແກ້ໄຂຂໍ້ຂັດແຍ່ງສຳລັບການສຶກສາພິເສດ ສາມາດຫາໄດ້ໃນເວັບໄຊ້ຂອງ TEA ທີ່ (ລິ້ງເຊື່ອມຕໍ່: bit.ly/3bL6n73).

## ການຊ່ວຍເຫຼືອເພີ່ມຕື່ມ

ສຳລັບລາຍການຄວາມໝາຍຂອງຄຳຫຍໍ້ທັງໝົດແມ່ນສາມາດຫາໃນເອກະສານນີ້, ເບິ່ງທີ່ (ລິ້ງເຊື່ອມຕໍ່: bit.ly/3oIsKNS).

ສຳເນົາຂອງເອກະສານສະບັບນີ້ແມ່ນມີໃຫ້ເປັນພາສາອື່ນໆຢູ່ໃນເວັບໄຊ SPEDTex (ລິ້ງເຊື່ອມຕໍ່: bit.ly/3qorCzg).

ທ່ານສາມາດຮ້ອງຂໍສຳເນົາຈາກທີ່ປຶກສາຂອງໂຮງຮຽນ ຫຼື ພະແນກການສຶກສາພິເສດຂອງໂຮງຮຽນ.